ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ເລກທີ: 780 -\ພກພ

ນະຄອນຫຼວງວຽງຈັນ, ວັນທີ: 02 APR 2021

ໜັງສືແຈ້ງເຊີນ

ຮຽນ: ທ່ານຜູ້ຖືຮຸ້ນ ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020.

- ອີງຕາມມະຕິກອງປະຊຸມສະພາບໍລິຫານ ສະໄໝວິສາມັນ ຄັ້ງທີ 1/2021 ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ລົງວັນທີ 15 ມີນາ 2021.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດຮຽນເຊີນທ່ານຜູ້ຖືຮຸ້ນຂອງບໍລິສັດເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ທີ່ຈະໄດ້ຈັດຂຶ້ນໃນວັນທີ **28 ເມສາ 2021** ເວລາ **14:30** ໂມງ (ເລີ່ມລົງທະບຽນເວລາ **13:00** ໂມງ) ທີ່ຊັ້ນ 12, ໂຮງແຮມ ຄອນທີເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ. ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ບໍລິສັດໄດ້ກຳນົດເອົາວັນທີ **31 ມີນາ 2021** ເປັນມື້ປິດປຶ້ມບັນຊີຜູ້ຖືຄອງຮຸ້ນ (Record Date) ເພື່ອກຳນົດສິດໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020.

ໃນກໍລະນີທີ່ທ່ານຜູ້ຖືຮຸ້ນບໍ່ສາມາດເຂົ້າຮ່ວມ ສາມາດມອບສິດໃຫ້ບຸກຄົນອື່ນເຂົ້າຮ່ວມປະຊຸມ ແລະ ອອກຄະແນນສຽງແທນ, ກະລຸນາຕື່ມຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດ ຕາມເອກະສານຄັດຕິດເຂົ້າຮ່ວມປະຊຸມ ແລະ ຕ້ອງສົ່ງມອບໃບມອບສິດໃຫ້ເລຂາກອງປະຊຸມກ່ອນເລີ່ມປະຊຸມ.

ຫວັງຢ່າງຍິ່ງວ່າ ທ່ານຄົງຈະສະລະເວລາອັນມີຄ່າຂອງທ່ານເຂົ້າຮ່ວມປະຊຸມກັບພວກເຮົາໃນຄັ້ງນີ້ດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ປະທານສະພາບໍລິຫານ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ
Phousy Construction and Development Public Company

ສີທອງ ພົມມະຈິດ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທີເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ເອກະສານກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2020

ວັນພຸດ ວັນທີ 28 ເມສາ 2021
ລົງທະບຽນເວລາ 13:00 ໂມງ
ສະຖານທີ່: ທີ່ຊັ້ນ 12, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງ
ບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທລະສັບ/ແຟັກ: +856 (21) 265 394.

ເອກະສານຄັດຕິດ THE ATTACHMENT

1. ວາລະກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2020 (ເອກະສານຄັດຕິດ 1);
2. ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 (ເອກະສານຄັດຕິດ 2);
3. ບົດລາຍງານ ແລະ ເອກະສານລາຍງານການເງິນ ປະຈຳປີ 2020 (ເອກະສານຄັດຕິດ 3);
4. ປະຫວັດຫຍໍ້ຂອງສະມາຊິກອິດສະຫຼະ (ເອກະສານຄັດຕິດ 4);
5. ແບບຟອມໃບມອບສິດ (ເອກະສານຄັດຕິດ 5);
6. ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ (ເອກະສານຄັດຕິດ 6);
7. ແຜນທີ່ສະຖານທີ່ຈັດປະຊຸມ (ເອກະສານຄັດຕິດ 7);

ໝາຍເຫດ

1. ຜູ້ຖືຮຸ້ນທຸກທ່ານ ຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ເລີ່ມຕັ້ງແຕ່ 07 ເມສາ 2021, ຢູ່ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນ, ຖະໜົນ ໄຊເສດຖາ, ນະຄອນຫຼວງວຽງຈັນ, ເລກໂທລະສັບ: (856-21) 454361-4;
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ;
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງ ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດ ຕາມ **<u>ເອກະສານຄັດຕິດ 5</u>** ທີ່ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ;
4. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ **<u>ເອກະສານຄັດຕິດ 6</u>** ທີ່ໄດ້ຄັດຕິດມາພ້ອມ ແລະ ສົ່ງມອບໃຫ້ປະທານກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້;
5. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ຜູ້ອຳນວຍການຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດ ແລະ ໝາຍ (✓) ເພື່ອເລືອກເອົາຜູ້ອຳນວຍການຂອງບໍລິສັດ ທ່ານໃດທ່ານໜຶ່ງເປັນຜູ້ຕ່າງໜ້າ ແລະ ສົ່ງໃບມອບສິດດັ່ງກ່າວພ້ອມເອກະສານປະກອບ ສົ່ງເຖິງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ເລຂາກອງປະຊຸມບໍລິສັດ ທີ່ຊັ້ນ 3 ໂຮງແຮມ ຄອນທີເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ ແລະ ກະລຸນາສົ່ງເຖິງບໍລິສັດກ່ອນວັນ**ທີ 28 ເມສາ 2021.**
6. ຖ້າຫາກທ່ານໃດມີຂໍ້ສົງໄສ ແລະ ຄຳຖາມກ່ຽວກັບໃບມອບສິດ ລວມທັງລາຍລະອຽດໃນໜັງສືເຊີນປະຊຸມສະບັບນີ້ ທ່ານສາມາດສອບຖາມ ທ່ານ ອາໂນໄລ ສີຫາລາດ ເບີໂທ (+856-21) 265 394 ໃນໂມງລັດຖະການ.

ເອກະສານຄັດຕິດ 1

ວາລະກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2020 ຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019

ຂໍ້ມູນປະກອບ: ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ໄດ້ຈັດຂຶ້ນໃນວັນທີ 29 ພຶດສະພາ 2020 ໂດຍກອງປະຊຸມໄດ້ພິຈາລະນາວາລະຕ່າງໆ ແລະ ໄດ້ເຮັດບົດບັນທຶກຕາມເນື້ອໃນຂອງກອງປະຊຸມຢ່າງຖືກຕ້ອງ ໂດຍມີລາຍລະອຽດຂອງບົດບັນທຶກກອງປະຊຸມຕາມ (**ເອກະສານຄັດຕິດ 2**).

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາວາລະນີ້.

ການລົງມະຕິ: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2020 ແລະ ເອກະສານລາຍງານການເງິນ ປະຈຳປີ 2020 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ

ຂໍ້ມູນປະກອບ:

I. ຜົນການດຳເນີນງານ ປະຈຳປີ 2020 ມີດັ່ງລຸ່ມນີ້:

- **ວຽກງານດ້ານການຕະຫຼາດ**

ໃນປະຈຸບັນ PCD ແມ່ນໄດ້ສືບຕໍ່ຈັດຕັ້ງປະຕິບັດໂຄງການທີ່ຍັງບໍ່ທັນສຳເລັດ 2 ໂຄງການຄື: ໂຄງການກໍ່ສ້າງທາງປູຢາງ 2 ຊັ້ນ ແຕ່ບ້ານອູ້ ເມືອງຫຼວງພະບາງ ຫາ ບ້ານ ສີບຸນເຮືອງ ເມືອງ ນານ ແຂວງຫຼວງພະບາງລວງຍາວ 50.2 ກິໂລແມດ ແລະ ໂຄງການກໍ່ສ້າງທາງຍົກລະດັບ ແຕ່ບ້ານກ໋ວເຈຍ ຫາ ບ້ານເມືອງຮຶບ ເມືອງໂພນທອງ ແຂວງຫຼວງພະບາງ ຄວາມຍາວ 32.565 ກິໂລແມັດ.

- ໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ປາກເຊເຊິ່ງມີມູນຄ່າ ປະມານ 4 ຕື້ກວ່າໂດລາ ແລະ ພວກເຮົາ ບໍລິສັດພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ກໍ່ແມ່ນໜຶ່ງໃນ 4 ບໍລິສັດທີ່ໄດ້ຮັບການຂັດເລືອກເຂົ້າຮອບສຸດທ້າຍແມ່ນການສຳຫຼວດອອກແບບແລວທາງແມ່ນສຳເລັດແລ້ວປະຈຸບັນແມ່ນກະຊວງໂຍທາ ແລະ ຂົນສົ່ງກຳລັງກະກຽມຍື່ນແບບຕໍ່ລັດຖະບານເພື່ອຮັບຮອງ.
- ໝູ່ບ້ານຈັດສັນສະໄໝໃໝ່ສຳລັບບຸກຄົນທົ່ວໄປທີ່ມີລາຍໄດ້ຕ່ຳ ຈຳນວນ 200,000 ຫລັງໃນທົ່ວປະເທດ , ແມ່ນຍັງຊອກຫາຄູ່ຮ່ວມທຶນຈາກຕ່າງປະເທດ.
- ໂຄງການປ້ອງກັນຕາຝັ່ງເຈື່ອນໄລຍະທີສອງຄວາມຍາວ 8,3 ກມ ນະຄອນຫຼວງວຽງຈັນ (ຮັບເໝົ້າຕໍ່ຈາກ ບໍລິສັດເກົ້າຫຼີ) ແມ່ນໄດ້ຢື່ນເອກກະສານແລ້ວ ແລະ ປະຈຸບັນແມ່ນລໍຖ້າການເປີດຊອງປະມູນ.

- ໂຄງການກໍ່ສ້າງພື້ນຖານໂຄງລ່າງເຂດເສດຖະກິດພິເສດ ຫຼວງພະບາງ ມູນຄ່າ 2,5 ລ້ານໂດລາສະຫະລັດ ແມ່ນລໍຖ້າເຈົ້າຂອງໂຄງການປັກຫຼັກໝາຍເຂດແດນ ແລະ ຊົດເຊີຍຜົນກະທົບສິ່ງແວດລ້ອມແລ້ວຈຶ່ງສາມາດຈັດຕັ້ງປະຕິບັດໄດ້.

❖ **ການມອບພັນທະອາກອນ**

ການມອບພັນທະອາກອນໃຫ້ລັດ ປະຈຳ ປີ 2020

ລ/ດ	ລາຍການ	ລວມມູນຄ່າ (ກີບ)
1	ອາກອນມູນຄ່າເພີ່ມ	573.030.630
2	ອາກອນເງິນເດືອນ	30.336.000
3	ອາກອນກຳໄລ	158.860.089
	ລວມ	**762.226.719**

❖ **ວຽກງານດ້ານບຸກຄະລາກອນ**

ວັນທີ: 31/12/2020 ມີພະນັກງານທັງໝົດຈຳນວນ 177 ຄົນ. ດ້ານສະຫວັດດີການສັງຄົມ, ມີການດູແລຊີວິດການເປັນຢູ່ ຂອງພະນັກງານພາຍໃນອົງກອນໃຫ້ດີຂຶ້ນ ບໍລິສັດໄດ້ເຮັດການສຳຫຼວດເພື່ອກະກຽມສະຫນອງປະກັນສັງຄົມໃຫ້ແກ່ພະນັກງານທຸກຄົນ, ມີການກວດສຸຂະພາບປະຈຳປີ, ເຮັດວຽກຕາມວັນເວລາ ແລະ ມີມື້ລາພັກປະຈຳປີ ຕາມກົດໝາຍແຮງງານລາວວ່າງອອກ.

II. ເອກະສານລາຍງານການເງິນ ປະຈຳປີ 2020 ສາມາດສະຫຼຸບຕົວເລກໄດ້ດັ່ງນີ້:

ລາຍການ	2020	2019
ຊັບສິນທັງໝົດ (ລ້ານກີບ)	620.328	665.044
ໜີ້ສິນທັງໝົດ (ລ້ານກີບ)	168.200	154.974
ສ່ວນຂອງຜູ້ຖືຮຸ້ນ (ລ້ານກີບ)	452.128	510.070
ລາຍຮັບທັງໝົດ (ລ້ານກີບ)	5.642	9.699
ກຳໄລ/(ຂາດທຶນ) ສຸດທິ (ລ້ານກີບ)	(57.942)	(8.790)
ກຳໄລສຸດທິຕໍ່ຮຸ້ນ (ກີບ/ຮຸ້ນ)	(99,56)	(15,10)

ລາຍລະອຽດຂອງຮ່າງເອກະສານລາຍງານການເງິນ ປະຈຳປີ 2020 ຕາມ (**ເອກະສານຄັດຕິດ 3**).

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາວາລະນີ້.

<u>ການລົງມະຕິ</u>: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 03. ພິຈາລະນາການບໍ່ຈ່າຍເງິນປັນຜົນ ປະຈຳປີ 2020 ເນື່ອງມາຈາກບໍລິສັດຂາດທຶນຈາກການດຳເນີນງານ

ຂໍ້ມູນປະກອບ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 155 "ການຈ່າຍເງິນປັນຜົນ" ຫ້າມບໍ່ໃຫ້ບໍລິສັດຈ່າຍເງິນປັນຜົນ ເມື່ອບໍລິສັດຍັງມີຂາດທຶນຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ.

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມພິຈາລະນາຮັບຮອງເອົາການບໍ່ຈ່າຍເງິນປັນຜົນ ປະຈຳປີ 2020.

ການລົງມະຕິ: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 04. ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2021

1. ໂຄງການກໍ່ສ້າງທາງຫຼວງແຫ່ງຊາດເລກທີ 13 ເໜືອ ແຕ່ ສີງເປືອຍ ຫາ ໂພງໂຮງ ລວງຍາວ 5 ກມ ໃນຄ່າ 4.500.000.000 ກີບ (ຮັບເໝົາຕໍ່ຈາກບໍລິສັດຈີນ).
2. ໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນໄລຍະທີ 2 ຢູ່ນະຄອນຫຼວງວຽງຈັນ ລວງຍາວ 8,3 ກມ (ຮັບເໝົາຕໍ່ຈາກເກົາຫຼີ).
3. ໂຄງການກໍ່ສ້າງທາງຢູ່ເຂດເສດຖະກິດພິເສດ ແຂວງຫຼວງພະບາງ ຮັບເໝົາຕໍ່ຈາກບໍລິສັດພູສີກຸບ ຮ່ວມກັບ ບໍລິສັດເມກາ ຫົງສາ.
4. ໂຄງການບ້ານຈັດສັນ ໄລຍະທຳອິດ 200 ຫຼັງ.
5. ຮັບເໝົາຕໍ່ຊ່ວງກັບພູສີກຸບ ໂຄງການກໍ່ສ້າງພື້ນຖານໂຄງລາງ ເຂດເສດຖະກິດພິເສດ S2 ຊ່ວງທຳອິດ ມູນຄ່າ 2,5 ລ້ານ ໂດລາ.

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມພິຈາລະນາຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2021.

ການລົງມະຕິ: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 05. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2021

ຂໍ້ມູນປະກອບ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 154 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ ໂດຍການສະເໜີຂອງ ສະພາບໍລິຫານໄດ້ພິຈາລະນາເຫັນຄວນໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາອະນຸມັດແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ (PWC) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2021 ໂດຍມີຄ່າຈ້າງເປັນຈຳນວນເງິນບໍ່ເກີນ 35.000 ໂດລາສະຫາລັດ, ບໍລິສັດ PWC ເປັນຜູ້ກວດສອບພາຍນອກທີ່ມີປະສົບການ, ຊຶ່ງມີຜູ້ກວດສອບ ແລະ ທີມງານມີຄວາມເຂົ້າໃຈແຈ້ງໃນໜ້າທີ່, ມີຄວາມລະອຽດຮອບຄອບໃນການທົບທວນ ແລະ ເປັນບໍລິສັດກວດສອບ

ບັນຊີທີ່ໄດ້ມາດຕະຖານ ລວມທັງໄດ້ຮັບຄວາມໄວ້ວາງໃຈໃນລະດັບສາກົນ. ໂດຍມີລາຍລະອຽດຄ່າຈ້າງແຕ່ລະປີມີດັ່ງລຸ່ມນີ້:

ປີ	ຜູ້ກວດສອບບັນຊີພາຍນອກ	ມູນຄ່າການກວດສອບ (ໂດລາສະຫາລັດ)
2016	ບໍລິສັດ ພຣາຍສ໌ວໍເຕີ້ເຮົ້ົ້ສ ກຸບເປີສ (ລາວ) ຈຳກັດຜູ້ດຽວ	47.000
2017	ບໍລິສັດ ພຣາຍສ໌ວໍເຕີ້ເຮົ້ົ້ສ ກຸບເປີສ (ລາວ) ຈຳກັດຜູ້ດຽວ	45.000
2018	ບໍລິສັດ ພຣາຍສ໌ວໍເຕີ້ເຮົ້ົ້ສ ກຸບເປີສ (ລາວ) ຈຳກັດຜູ້ດຽວ	32.390
2019	ບໍລິສັດ ພຣາຍສ໌ວໍເຕີ້ເຮົ້ົ້ສ ກຸບເປີສ (ລາວ) ຈຳກັດຜູ້ດຽວ	35.690
2020	ບໍລິສັດ ພຣາຍສ໌ວໍເຕີ້ເຮົ້ົ້ສ ກຸບເປີສ (ລາວ) ຈຳກັດຜູ້ດຽວ	35.000

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມພິຈາລະນາຮັບຮອງເອົາການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2021.

ການລົງມະຕິ: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----===000===-----

PCD

ເລກທີ: 535 -/ພກພ
ນະຄອນຫຼວງວຽງຈັນ, ວັນທີ: 02 JUN 2020

ບົດບັນທຶກ
ກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2019

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ໄດ້ຈັດກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2019 ໃນວັນທີ 29 ພຶດສະພາ 2020 ເວລາ 14:20 ໂມງ, ທີ່ຊັ້ນ 12, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ. ໂດຍມີຜູ້ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງທັງໝົດ 12 ທ່ານ ແລະ ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຈຳນວນ 129 ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 141 ທ່ານ ເຊິ່ງຖືຮຸ້ນລວມກັນທັງໝົດ 572,581,500 ຮຸ້ນ, ເທົ່າກັບ 98.38% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ.

ພິທີກອນ ໄດ້ນຳສະເໜີຜູ້ເຂົ້າຮ່ວມກອງປະຊຸມ ເຊິ່ງມີລາຍຊື່ດັ່ງລຸ່ມນີ້:

1. ທ່ານ ຂັນທະວີ ດາລາວົງ — ຮອງປະທານສະພາບໍລິຫານ/ສະມາຊິກອິດສະຫຼະ
2. ທ່ານ ສີທາ ພິມມະຈິດ — ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່;
3. ທ່ານ ພູຂົງ ອ້ວນລະມະນີ — ສະມາຊິກສະພາບໍລິຫານ.

ທ່ານ ສີທອງ ພິມມະຈິດ ປະທານສະພາບໍລິຫານ ແລະ ທ່ານ ນັນທະລັດ ທິລະກຸນ ສະມາຊິກສະພາບໍລິຫານ/ສະມາຊິກອິດສະຫຼະ ຕິດພາລະກິດຈຶ່ງບໍ່ສາມາດເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ໃນຄັ້ງນີ້ໄດ້ ແລະ ໄດ້ແຕ່ງຕັ້ງ ທ່ານ ຂັນທະວີ ດາລາວົງ ຮອງປະທານສະພາບໍລິຫານ/ສະມາຊິກອິດສະຫຼະ ເປັນປະທານກອງປະຊຸມແທນ.

ພ້ອມດຽວກັນນີ້ ກໍ່ຍັງມີທ່ານຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ (PWC).

ພິທີກອນໄດ້ແນະນຳກ່ຽວກັບການລົງຄະແນນສຽງ, ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນໃຫ້ບັນດາທ່ານຜູ້ຖືຮຸ້ນ ຮັບຊາບ.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com

ປະທານກອງປະຊຸມ ໄດ້ກ່າວເປີດກອງປະຊຸມຢ່າງເປັນທາງການ ແລະ ໄດ້ມອບໝາຍໃຫ້ທ່ານ ສີທາ ພົມມະຈິດ ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ໄດ້ລາຍງານວາລະໃນກອງປະຊຸມ ເຊິ່ງມີລາຍລະອຽດດັ່ງນີ້:

ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018

ທ່ານ ຜູ້ອຳນວຍການໃຫຍ່ ໄດ້ລາຍງານກ່ຽວກັບກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ໄດ້ຈັດຂຶ້ນໃນວັນທີ 28 ກຸມພາ 2020 ໂດຍກອງປະຊຸມໄດ້ພິຈາລະນາວາລະຕ່າງໆ ແລະ ໄດ້ເຮັດບົດບັນທຶກຕາມເນື້ອໃນຂອງກອງປະຊຸມຢ່າງຖືກຕ້ອງ.

ຫຼັງຈາກ ທ່ານ ຜູ້ອຳນວຍການໃຫຍ່ ໄດ້ລາຍງານແລ້ວ ແລະ ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນ.

ຕໍ່ມາ, ທ່ານ ຜູ້ອຳນວຍການໃຫຍ່ ໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງວາລະນີ້.

<u>ມະຕິ</u>: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີເປັນເອກະພາບ ດັ່ງນີ້:

- ເຫັນດີ: ຈຳນວນ 572,581,500 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2019 ແລະ ເອກະສານລາຍງານການເງິນ ປະຈຳປີ 2019 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ

ທ່ານ ຜູ້ອຳນວຍການໃຫຍ່ ໄດ້ລາຍງານ ຕໍ່ກອງປະຊຸມດັ່ງນີ້:

I. ຜົນການດຳເນີນງານ ປະຈຳປີ 2019 ມີດັ່ງລຸ່ມນີ້:

❖ **ວຽກງານດ້ານການຕະຫຼາດ**

ຫຼັງຈາກ ບໍລິສັດຂອງພວກເຮົາ ເຊັນ MOU ໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ປາກເຊ ເຊິ່ງມີມູນຄ່າ ປະມານ 4 ຕື້ກວ່າໂດລາ ແລະ ພວກເຮົາ ບໍລິສັດພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ກໍ່ແມ່ນໜຶ່ງໃນ 4 ບໍລິສັດທີ່ໄດ້ຮັບການຄັດເລືອກເຂົ້າຮອບສຸດທ້າຍ ປະຈຸບັນແມ່ນຢູ່ໃນຂັ້ນຕອນສຳຫຼວດແລວທາງ ແລະ ອອກແບບຄົດໄລ່ປະເມີນລາຄາເພື່ອຍື່ນຕໍ່ເຈົ້າຂອງໂຄງການ ແລະ ກຽມເຊັນສັນຍາກໍ່ສ້າງໃນຂັ້ນຕໍ່ໄປ. ນອກນັ້ນພວກເຮົາຍັງວິ່ງເຕັ້ນຊອກຫາແລ່ງທຶນ ແລະ ຄູ່ຮ່ວມລົງທຶນຈາກຕ່າງປະເທດເພື່ອເຂົ້າມາພັດທະນາໂຄງການອະສັງຫາລິມະຊັບໂດຍການກໍ່ສ້າງໂຮງແຮມລະດັບ 4-5 ດາວທີ່ນະຄອນຫຼວງວຽງຈັນ, ຫຼວງພະບາງ ແລະ ຫມູ່ບ້ານຈັດສັນສະໄຫມໃຫມ່ສຳລັບບຸກຄົນທົ່ວໄປທີ່ມີລາຍໄດ້ຕ່ຳ ຈຳນວນ 200,000 ຫລັງໃນທົ່ວປະເທດ.

❖ **ການມອບພັນທະອາກອນ**

ການມອບພັນທະອາກອນໃຫ້ລັດ ປະຈຳ ປີ 2019

ລ/ດ	ລາຍການ	ລວມມູນຄ່າ (ກີບ)
1	ອາກອນມູນຄ່າເພີ່ມ	596,549,478
2	ອາກອນເງິນເດືອນ	42,943,000
3	ອາກອນກຳໄລ	143,172,635

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com

	ລວມ	782,665,113

❖ **ວຽກງານດ້ານບຸກຄະລາກອນ**

ວັນທີ: 31/12/2019 ມີພະນັກງານທັງໝົດຈຳນວນ 177 ຄົນ, ບໍລິສັດໄດ້ເຮັດສຳເລັດການເຮັດປະກັນສັງຄົມ ໃຫ້ແກ່ ພະນັກງານທຸກຄົນ, ມີການກວດສຸຂະພາບປະຈຳປີ, ເຮັດວຽກຕາມວັນເວລາ ແລະ ມີມື້ລາພັກປະຈຳປີ ຕາມ ກົດໝາຍແຮງງານລາວວ່າງອອກ.

❖ **ຜົນການດຳເນີນງານທຽບໃສ່ແຜນປີ 2019**

ລດ	ຊື່ໂຄງການ	ມູນຄ່າປະຕິບັດຕົວຈິງທຽບໃສ່ແຜນປີ 2019	
1	ສ້ອມແປງຂົວ-ທາງ ແຂວງ ບໍ່ແກ້ວ ຫາ ຫຼວງນ້ຳທາ	0%	ບໍ່ທັນໄດ້ປະຕິບັດ(ລັດຖະບານໃຫ້ສະລຳການລົງທຶນສຳລັບໂຄງການທີ່ສະເໜີໃໝ່ ໃຫ້ຈັດເຂົ້າແຜນງົບປະມານ 2020-2021)
2	ສ້ອມແປງຂົວ-ທາງ ແຂວງ ອັດຕາປື	0%	ບໍ່ໄດ້ປະຕິບັດ(ຢູ່ໃນຂັ້ນຕອນລາຍງານລັດຖະບານຂໍອະນຸມັດງົບປະມານກໍ່ສ້າງ ພາຍຫຼັງທີ່ລັດຖະບານຮັບຮອງງົບປະມານແລ້ວຈຶ່ງສາມາດລົງມືກໍ່ສ້າງໄດ້)
3	ສ້ອມແປງຂົວ-ທາງແຂວງ ບໍ່ແກ້ວ	0%	ບໍ່ໄດ້ຈັດຕັ້ງປະຕິບັດ(ຍ້ອນວ່າທາງແຂວງໄດ້ມີການແບ່ງສັນຍາເປັນສັນຍານ້ອຍ ເພື່ອນຳໃຊ້ງົບປະມານຂອງແຂວງແກ້ໄຂກ່ອນ)
4	ສ້ອມແປງຂົວ-ທາງ ແຂວງ ຫຼວງພະບາງ	0%	ບໍ່ໄດ້ປະຕິບັດ(ຢູ່ໃນຂັ້ນຕອນສະເໜີຜ່ານງົບປະມານການກໍ່ສ້າງນຳລັດຖະບານ ລັດຖະບານໄດ້ມີການແນະນຳສະເພາະໂຄງການສະເໜີໃໝ່ແມ່ນໃຫ້ຈັດຢູ່ໃນ ສົກປີງົບປະມານ 2020-2021)

II. ເອກະສານລາຍງານການເງິນ ປະຈຳປີ 2019 ສາມາດສະຫຼຸບຕົວເລກໄດ້ດັ່ງນີ້:

ລາຍການ	2019	2018
ຊັບສິນທັງໝົດ (ລ້ານກີບ)	675,643	669,615
ໜີ້ສິນທັງໝົດ (ລ້ານກີບ)	166,770	150,755
ສ່ວນຂອງຜູ້ຖືຮຸ້ນ (ລ້ານກີບ)	508,873	518,860
ລາຍຮັບທັງໝົດ (ລ້ານກີບ)	5,590	0
ກຳໄລ/(ຂາດທຶນ) ສຸດທິ (ລ້ານກີບ)	(9,986)	(283,421)
ກຳໄລສຸດທິຕໍ່ຮຸ້ນ (ກີບ/ຮຸ້ນ)	(17.16)	(486.98)

ຫຼັງຈາກ ທ່ານ ຜູ້ອຳນວຍການໃຫຍ່ ໄດ້ລາຍງານແລ້ວ ແລະ ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນ.

ຕໍ່ມາ, ທ່ານ ຜູ້ອຳນວຍການໃຫຍ່ ໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງວາລະນີ້.

<u>**ມະຕິ**</u>: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີເປັນເອກະພາບ ດັ່ງນີ້:

- ເຫັນດີ: ຈຳນວນ 572,581,500 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3: ພິຈາລະນາການບໍ່ຈ່າຍເງິນປັນຜົນ ປະຈຳປີ 2019

ທ່ານ ຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ກອງປະຊຸມວ່າ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 155 "ການຈ່າຍເງິນປັນຜົນ" ຫ້າມບໍ່ໃຫ້ບໍລິສັດຈ່າຍເງິນປັນຜົນ ເມື່ອບໍລິສັດຍັງ ມີຂາດທຶນຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ. ປີ 2019 ບໍລິສັດຂາດທຶນຈຳນວນ 9,986 ລ້ານກີບ.

ຫຼັງຈາກ ທ່ານ ຜູ້ອຳນວຍການໃຫຍ່ ໄດ້ລາຍງານແລ້ວ ແລະ ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນ.

ຕໍ່ມາ, ທ່ານ ຜູ້ອຳນວຍການໃຫຍ່ ໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງວາລະນີ້.

<u>**ມະຕິ**</u>: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີເປັນເອກະພາບ ດັ່ງນີ້:

- ເຫັນດີ: ຈຳນວນ 572,581,500 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020

ທ່ານ ຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ກອງປະຊຸມວ່າ: ໃນປີ 2020 ພກພ ໄດ້ເຊັນສັນຍາໂຄງການໃໝ່ຈຳນວນ 3 ໂຄງການ ແລະ ຈະສືບຕໍ່ດຳເນີນໂຄງການເກົ່າ ຈຳນວນ 2 ໂຄງການ, ຄາດວ່າຈະໄດ້ລົງທຶນທັງໝົດປະມານ 31,479 ລ້ານກີບ ແລະ ຄາດວ່າຈະມີລາຍຮັບທັງໝົດປະມານ 56,898 ລ້ານກີບ. ລາຍລະອຽດດັ່ງລຸ່ມນີ້:

ໜ່ວຍ: ລ້ານກີບ

ລດ	ຊື່ໂຄງການ	ມູນຄ່າທີ່ຈະໄດ້ລົງທຶນ	ມູນຄ່າທີ່ຈະໄດ້ຮັບ
1	ສ້ອມແປງຂົວ-ທາງ ແຂວງ ບໍ່ແກ້ວ ຫາ ຫຼວງນ້ຳທາ	6,581	11,545
2	ສ້ອມແປງຂົວ-ທາງ ແຂວງອັດຕາປື	8,104	14,472
3	ສ້ອມແປງຂົວ-ທາງ ແຂວງ ຫຼວງພະບາງ	3,694	6,482
4	ກໍ່ສ້າງຍົກລະດັບທາງດິນແດງ ກິ່ວເຈຍ-ເມືອງຮົບ(ເມືອງໂພນ ທອງ) ແຂວງຫຼວງພະບາງ	3,400	8,234
5	ກໍ່ສ້າງທາງປູຢາງສອງຊັ້ນ ແລະຂົວເບຕົງ ບ້ານອູ-ບ້ານສີບຸນເຮືອງ (ເມືອງຫຼວງພະບາງ ຫາ ເມືອງນານ) ແຂວງຫຼວງພະບາງ	9,700	16,165
ລວມ		**31,479**	**56,898**

ຫຼັງຈາກ ທ່ານ ຜູ້ອຳນວຍການໃຫຍ່ ໄດ້ລາຍງານແລ້ວ ແລະ ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນ

ຕໍ່ມາ, ທ່ານ ປະທານ ໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງວາລະນີ້.

<u>**ມະຕິ**</u>: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີເປັນເອກະພາບ ດັ່ງນີ້:

- ເຫັນດີ: ຈຳນວນ 572,581,500 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2020

ທ່ານ ຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ກອງປະຊຸມວ່າ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 154 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມ

ສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ ໂດຍການສະເໜີຂອງ ສະພາບໍລິຫານໄດ້ພິຈາລະນາເຫັນຄວນໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາອະນຸມັດແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ (PWC) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2020 ໂດຍມີຄ່າຈ້າງເປັນຈຳນວນເງິນບໍ່ເກີນ 35,000 ໂດລາສະຫາລັດ, PWC ເປັນບໍລິສັດກວດສອບບັນຊີທີ່ໄດ້ມາດຕະຖານ ລວມທັງໄດ້ຮັບຄວາມໄວ້ວາງໃຈໃນລະດັບສາກົນ. ໂດຍມີລາຍລະອຽດຄ່າຈ້າງຂອງປີຜ່ານມາມີດັ່ງລຸ່ມນີ້:

ປີ	ຜູ້ກວດສອບບັນຊີພາຍນອກ	ມູນຄ່າການກວດສອບ (ໂດລາສະຫາລັດ)
2017	ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	45,000
2018	ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	32,390
2019	ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	35,690

ຫຼັງຈາກ ທ່ານ ຜູ້ອຳນວຍການໃຫຍ່ ໄດ້ລາຍງານແລ້ວ ແລະ ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນ.

ຕໍ່ມາ, ທ່ານ ຜູ້ອຳນວຍການໃຫຍ່ ໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງວາລະນີ້

<u>**ມະຕິ**</u>: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີເປັນເອກະພາບ ດັ່ງນີ້:

- ເຫັນດີ: ຈຳນວນ 572,581,500 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6: ພິຈາລະນາ ແລະ ຮັບຮອງສະພາບໍລິຫານຊຸດໃໝ່ ວາລະເຮັດວຽກປີ 2020-2022

ທ່ານ ຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ກອງປະຊຸມວ່າ: ອີງຕາມລະບຽບຂອງ ພກພ ແລະ ຂໍ້ຕົກລົງວ່າດ້ວຍສະພາບໍລິຫານ ສະບັບເລກທີ 10/ຄຄຊ, ລົງວັນທີ 26 ເມສາ 2019. ສະມາຊິກສະພາບໍລິຫານ ມີອາຍຸການ 2 ປີ ແລະ ການແຕ່ງຕັ້ງສະມາຊິກສະພາບໍລິຫານ ຕ້ອງ ຜ່ານການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ. ປັດຈຸບັນ ສະມາຊິກສະພາບໍລິຫານ ໄດ້ຄົບອາຍຸການແລ້ວ. ເຫັນດີສະເໜີໃຫ້ກອງປະຊຸມຮັບຮອງສະມາຊິກສະພາບໍລິຫານຊຸດໃໝ່ ວາລະເຮັດວຽກປີ 2020-2022 ມີລາຍຊື່ດັ່ງນີ້:

1. ທ່ານ ສີທອງ ພົມມະຈິດ ປະທານ
2. ທ່ານ ບຸນມີ ມະນີວົງ ຮອງປະທານ/ສະມາຊິກອິດສະຫຼະ
3. ທ່ານ ນັນທະລັດ ທິລະກຸນ ສະມາຊິກ/ສະມາຊິກອິດສະຫຼະ
4. ທ່ານ ສີທາ ພົມມະຈິດ ສະມາຊິກ
5. ທ່ານ ພູຂົງ ອ້ວນລະມະນີ ສະມາຊິກ

ຫຼັງຈາກ ທ່ານ ຜູ້ອຳນວຍການໃຫຍ່ ໄດ້ລາຍງານແລ້ວ ແລະ ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນ.

ຕໍ່ມາ, ທ່ານ ປະທານ ໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງວາລະນີ້

<u>**ມະຕິ**</u>: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ດັ່ງນີ້:

- ເຫັນດີ: ຈຳນວນ 572,581,500 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ທ່ານປະທານກອງປະຊຸມ ໄດ້ແຈ້ງໃຫ້ຜູ້ຖືຮຸ້ນ ຊາບວ່າ ກອງປະຊຸມໄດ້ດຳເນີນຄົບຖ້ວນທຸກວາລະກອງປະຊຸມ ດັ່ງທີ່ໄດ້ກຳນົດໄວ້ໃນໜັງສືແຈ້ງເຊີນແລ້ວ ແລະ ໄດ້ສະເໜີໃຫ້ຜູ້ຖືຮຸ້ນປະກອບຄຳເຫັນອື່ນໆຕໍ່ ພກພ ແລະ ບໍ່ມີຜູ້ຖືຮຸ້ນປະກອບຄຳເຫັນ.

ກອງປະຊຸມບໍ່ມີບັນຫາເພີ່ມເຕີມທີ່ຈະພິຈາລະນາ, ທ່ານປະທານກອງປະຊຸມໄດ້ກ່າວປິດກອງປະຊຸມລົງຢ່າງເປັນທາງ ການ ໃນເວລາ 15:30 ໂມງ ຂອງວັນດຽວກັນ.

ປະທານກອງປະຊຸມ | **ຜູ້ບັນທຶກກອງປະຊຸມ**





ໝາຍເຫດ: ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ໃຫ້ຖືເອົາສະບັບພາສາລາວເປັນຫຼັກ

ບໍລິສັດ ພຸສົ່ກ່ສ້ຳ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com









ບົດລາຍງານການດຳເນີນທຸລະກິດ ປະຈຳປີ 2020

ລາຍລະອຽດ /Contents

I. ປະຫວັດຄວາມເປັນມາຂອງບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາມະຫາຊົນ.....1

II. ເປົ້າໝາຍຫລັກຂອງການດຳເນີນທຸລະກິດ.....4

III. ໂຄງຮ່າງການຈັດຕັ້ງ.....5

IV. ຄວາມຄືບຫນ້າການດຳເນີນທຸລະກິດ ປີ 2020.....7

ປົດລາຍງານປະຈຳ ປີ 2020

I. ປະຫວັດຄວາມເປັນມາຂອງບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາມະຫາຊົນ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (“ ບໍລິສັດ” ຫຼື “PCD”) ເປັນໜຶ່ງໃນຜູ້ໃຫ້ບໍລິການວຽກງານວິສະ ວະ ກຳການກໍ່ສ້າງແບບຄົບວົງຈອນ (Design and Engineering Procurement Construction: Design and EPC) ເຊິ່ງລວມກັບວຽກດັ່ງນີ້: ວຽກງານການອອກແບບໂຄງສ້າງວິສະວະກຳ (Design), ວຽກງານຈັດການແບບ ງານວິ ສະວະກຳ (Engineering), ວຽກງານການຈັດຫາອັດສະດຸອຸປະກອບສຳລັບງານວິສະວະກຳ (Procurement) ແລະ ວຽກງານກໍ່ສ້າງ (Construction). ໂດຍບໍລິສັດມີເປົ້າໝາຍໃຫ້ ບໍລິການໃນວຽກງານວິສະວະກຳພື້ນຖານໂຄງລ່າງເປັນ ຫຼັກເຊັ່ນ: ວຽກກໍ່ສ້າງຖະໜົນ ຫົນທາງ, ຕ້ານເຈື່ອນ ແລະ ພື້ນຖານໂຄງລ່າງອື່ນໆ

ດ້ວຍວິໄສທັດອັນກວ້າງໄກຂອງທ່ານ ສີພອນ ອຸທຸມພອນ (ທ່ານ ສີພອນ) ເຊິ່ງໄດ້ເບິ່ງເຫັນຄວາມຍຸ້ງຍາກໃນການ ເດີນທາງ ຂອງປະຊາຊົນ ປະກອບກັບເຂດພູມສັນຖານຂອງປະເທດເປັນເຂດພູສູງ ເຊິ່ງຍາກຕໍ່ການເດີນທາງ ໄປມາ ລະຫວ່າງບ້ານ, ເມືອງ, ແລະ ແຂວງ ລວມເຖິງ ທ່ານ ສີພອນ ມີແນວຄວາມຄິດຈະເຂົ້າຮ່ວມເປັນກົນຈັກໜຶ່ງໃນການຊຸກຍູ້ ເສີມສ້າງ ໂອກາດໃນການເຕີບໂຕທາງເສດຖະກິດໃນ ສປປ ລາວ . ໂດຍສະເພາະໃນເຂດພາກເໜືອຂອງປະເທດ ດັ່ງນັ້ນ, ໃນປີ 1997 ທ່ານ ສີພອນ ຈຶ່ງໄດ້ສ້າງຕັ້ງບໍລິສັດ ພູສີຫຼວງພະບາງກໍ່ສ້າງ ແລະ ສ້ອມແປງຂົວທາງ ຈຳກັດຜູ້ດຽວ ດ້ວຍທຶນ ຈົດທະບຽນ 10.000 ລ້ານກີບ ໂດຍມີເປົ້າໝາຍເພື່ອດຳເນີນກິດຈະການກໍ່ສ້າງພື້ນຖານໂຄງລ່າງເພື່ອອຳນວຍຄວາມ ສະດວກດ້ານການຄົມມະນາຄົມຂົນສົ່ງ ແລະ ການພົວພັນລະຫວ່າງແຂວງທາງພາກເໜືອໃຫ້ດີຂຶ້ນ. ໃນເວລານີ້ທ່ານສີທອງ ພົມມະຈິດ ກໍ່ແມ່ນໜຶ່ງໃນຜູ້ບໍລິຫານຈັດການຂອງບໍລິສັດດັ່ງກ່າວ.

ບໍລິສັດແມ່ນມີການເຕີບໃຫ່ຍຂະຫຍາຍຕົວຈົນຂຶ້ນມາເປັນບໍລິສັດທີ່ໃຫ້ບໍລິການດ້ານວິສະວະກຳການການ ກໍ່ສ້າງຂັ້ນແນວໜ້າໃນເຂດພາກເໜືອຂອງ ສປປ ລາວ. ຈົນ ມາຮອດປີ 2009 ທ່ານ ສີທອງ ພົມມະຈິດ (ທ່ານ ສີທອງ) ເຊິ່ງ ເປັນນັກທຸລະກິດໜຸ່ມຜູ້ມີວິໄສທັດ ໄດ້ເຂົ້າມາຮັບສືບທອດຂະຫຍາຍຕໍ່ໃນວຽກງານກໍ່ສ້າງຂອງບໍລິສັດ ໂດຍການໂອນຖ່າຍ ກິດຈະການຈາກທ່ານ ສີພອນ ໂດຍຍັງໃຊ້ຊື່ເດີມເປັນບໍລິສັດມີ ພູສີຫຼວງພະບາງກໍ່ສ້າງ ແລະ ສ້ອມແປງຂົວ -ທາງ ຈຳກັດຜູ້ ດຽວ ເຊິ່ງມີຜົນງານການໃຫ້ບໍລິການກໍ່ສ້າງໂຄງການທີ່ສຳຄັນຕ່າງໆເຊັ່ນ: ກໍ່ສ້າງທາງ ປູຢາງ 2 ຊັ້ນໃນເຂດພາກເໜືອ, ສ້າງ ທາງເອັ້ນຕົວເມືອງຫຼວງພະບາງ, ບຸກທະລຸເສັ້ນທາງລຽບຊາຍແດນ ສປປ ລາວ ຫວຽດນາມ-ກຳປູເຈຍ. ສອມແປງທາງຈາກ ຄວາມເສຍຫາຍໄພພິບັດຈາກທຳມະຊາດ ແລະ ອື່ນໆ. ບໍລິສັດຖືໄດ້ວ່າເປັນບໍລິສັດທີ່ມີ ສັກກະຍະພາບໃນການເປັນຜູ້ນຳ ດ້ານການພັດທະນາການກໍ່ສ້າງພື້ນຖານໂຄງລ່າງໄດ້ເປັນຢ່າງດີ. ພຽບພ້ອມດ້ວຍທີມງານທີ່ມີຄວາມຮູ້ຄວາມ, ມີເຕັກນິກ ທາງດ້ານວິສະວະກຳການກໍ່ສ້າງ ແລະ ເຕັກໂນໂລຊີການກໍ່ສ້າງທີ່ທັນສະໄໝ, ຮັກສາຄຸນນະພາບ ແລະ ມາດຕະຖານໃນ ການເຮັດວຽກໄດ້ ເປັນຢ່າງດີ, ສົ່ງມອບງານທັນເວລາ, ສ້າງຄວາມເຊື່ອຖືໃຫ້ກັບລູກຄ້າທີ່ເປັນເຈົ້າຂອງໂຄງການ. ໃນປັຈ ບັນບໍລິສັດໄດ້ປ່ຽນຊື່ມາເປັນ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ເພື່ອຂະຫຍາຍຂອບເຂດ ການໃຫບໍລິການ ດ້ານວິສະວະກຳການກໍ່ສ້າງແບບຄົບວົງຈອນ ແລະ ເປັນຜູ້ພັດທະນາໂຄງການຕໍ່ໄປໃນອະນາຄົດ .

ປີ		ສະຫຼຸບຫຍໍ້ເຫດການທີ່ພົ້ນເດັ່ນ
ປີ 1997	:	ບໍລິສັດ ພູສີຫຼວງພະບາງກໍ່ສ້າງ ແລະ ສ້ອມແປງຂົວ-ທາງ ຈຳກັດຜູ້ດຽວ ໄດ້ຖືກສ້າງຕັ້ງຂຶ້ນດ້ວຍທຶນຈົດທະບຽນ 10.000 ລ້ານກີບໂດຍທ່ານ ສີພອນ ອຸທຸມພອນ (ທ່ານ ສີພອນ) ເພື່ອດຳເນີນກິດຈະການ ງານກໍ່ສ້າງໂດຍເຂົ້າຮ່ວມປະມູນໂຄງການຈາກພາກລັດ ຫຼື ກະຊວງ ຍທຂ ກົມຂົວທາງ ຫຼື ພະແນກ ຍທຂ ປະຈຳແຂວງຫຼວງພະບາງ. ທ່ານ ສີພອນ ໄດ້ເບິ່ງເຫັນຄວາມຍຸ້ງຍາກຂອງການເດີນທາງໂດຍທາງລົດ ຂອງປະຊາຊົນ ຫຼື ການຂົນສົ່ງເນື່ອງຈາກຖະໜົນຫົນທາງບໍ່ດີ ແລະ ມີອັນຕະລາຍ ລວມເຖິງໄດ້ເບິ່ງເຫັນ ການຂະຫຍາຍຕົວຂອງທຸລະກິດຮັບເໝົາກໍ່ສ້າງໃນຊ່ວງນັ້ນໂດຍແມ່ນແນໃສ່ການກໍ່ສ້າງໃນພາກສ່ວນຂອງພື້ນຖານໂຄງລ່າງເປັນຫຼັກ ທີ່ຢູ່ໃນຂົງເຂດພາກເໜືອຂອງ ສປປ ລາວ.
ປີ 2004-2005	:	ຈາກການຈະເລີນເຕີບໂຕຢ່າງຫຼວງຫຼາຍຂອງເສດຖະກິດຂອງປະເທດ ແລະ ການຂະຫຍາຍຕົວເມືອງນ້ອຍ-ໃຫ່ຍປະກອບກັບການຂົນສົ່ງສິນຄ້າໂດຍທາງລົດ ແມ່ນມີຄວາມຈຳເປັນຫຼາຍຂຶ້ນ. ທ່ານ ສີພອນ ຈຶ່ງໄດ້ຂະຫຍາຍທຸລະກິດຮັບເໝົາກໍ່ສ້າງໄປຍັງແຂວງ ໄຊຍະບູລີ ແລະ ແຂວງ ບໍ່ແກ້ວ ໂດຍຍັງເນັ້ນວຽກງານການກໍ່ສ້າງພື້ນຖານໂຄງລ່າງເຊັ່ນ: ຖະໜົນຫົນທາງ ແລະ ຂົວ. ເຊິ່ງໃນຂະນະນີ້ເອງ ທ່ານ ສີທອງ ພິມມະຈິດ (ທ່ານ ສີທອງ)ເຂົ້າ ມາເປັນຜູ້ບໍລິຫານດ້ານ ການຈັດການຫ້ອງການ ແລະ ງານພາກສະໜາມຂອງບໍລິສັດ .
ປີ 2009	:	ທ່ານ ສີທອງ ເຊິ່ງເປັນນັກທຸລະກິດໜຸ່ມຜູ້ມີວິໃສ່ທັດໄດ້ເຂົ້າມາຮັບສືບທອດຂະຫຍາຍຕໍ່ໃນວຽກງານກໍ່ສ້າງຂອງບໍລິສັດ ໂດຍມີການໂອນຖ່າຍກິດຈະການຈາກທ່ານ ສີພອນ ມາຍັງ ທ່ານສີທອງ ໂດຍຍັງຄົງໃຊ້ຊື່ ບໍລິສັດ ພູສີຫຼວງພະບາງກໍ່ສ້າງ ແລະ ສ້ອມແປງຂົວ - ທາງ ຈຳກັດ ຜູ້ດຽວ.
ປີ 2011		ທ່ານ ສີທອງໄດ້ເຫັນການຂະຫຍາຍຕົວຂອງຕົວເມືອງຫຼວງພະບາງໃນພາກພື້ນທີ່ແອ ອັດຈຶ່ງໄດ້ປຶກສາກັບທີມຜູ້ບໍລິການຂອງບໍລິສັດ ສະເໜີໂຄງການໄປຍັງພະແນກ ຍທຂ ປະຈຳ ແຂວງ ຫຼວງພະບາງ ເພື່ອອະນຸມັດໂຄງການກໍ່ສ້າງທາງເວັ້ນຕົວເມືອງຫຼວງພະບາງ (By pass road) ເສັ້ນທາງ 13 ເໜືອ ຕັ້ງແຕ່ບ້ານ ກົ໊ກງົ໊ວ ຫາ ບ້ານພອນໄຊ ແລະ ຂົວເບຕົ້ງຂ້າມແມ່ນ້ຳຄານ 1 ແຫ່ງ. ດ້ວຍມູນຄ່າໂຄງການທັງໝົດປະມານ 209.907 ລ້ານກີບ. ເຊິ່ງ ບໍລິສັດແມ່ນໃຊ້ເງິນທຶນໝູນວຽນຂອງບໍລິສັດເຂົ້າໃນການກໍ່ສ້າງທັງໝົດ.

2016	:	ຕາມກອງປະຊຸມຜູ້ຖືຮຸ້ນໃນວັນທີ 18 ຕຸລາ 2016 ໄດ້ອະນຸມັດປັບປຸງມູນຄ່າກຳນົດ (Par Value) ເປັນ 2.000 ກີບຕໍ່ຮຸ້ນ, ອະນຸມັດການເພີ່ມທຶນຂອງບໍລິສັດຈາກເດີມ 10.000 ລ້ານ ກີບເປັນ700.000 ລ້ານ ກີບ ເຊິ່ງບໍລິສັດ ໄດ່ປ່ຽນຮູບແບບວິສາຫະກິດ ຈາກ ບໍລິສັດພູສີ ຫຼວງ ພະບາງກໍ່ສ້າງ ແລະ ສອມແປາຂົວ -ທາງ ຈຳກັດດຽວ ມາເປັນ **“ບໍລິສັດ ພູສີກໍ່ສ້າງແລະ ພັດທະນາ ມະຫາຊົນ”** . ອີງຕາມກອງປະຊຸມຜູ້ຖືຮຸ້ນ ໃນວັນທີ 18 ພະຈິກ 2016 ບໍລິສັດໄດ້ມີການປະຊຸມ ວິສາມັນຜູ້ຖືຮຸ້ນ ໄດ້ອະນຸມັດເລື່ອງທີ່ສຳຄັນ ຄື: ອະນຸມັດການເພີ່ມທຶນຈົດທະບຽນ 300.000 ລ້ານ ກີບ ໂດຍອອກຮຸ້ນສາມັນເພີ່ມທຶນຈຳນວນ 150 ລ້ານ ຮຸ້ນ , ມູນຄ່າກຳນົດ 2.000 ກີບຕໍ່ນ ຮຸ້ນ ເພື່ອການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ແລະ ຮອງຮັບ ການຂະຫຍາຍຕົວຂອງທຸລະກິດ ແລະ ການກຽມຕົວເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ (LSX) ສິ່ງຜົນໃຫ້ບໍລິສັດຈະມີທຶນຈົດທະບຽນທັງໝົດ 1.000.000 ລ້ານກີບພາຍຫຼັງ IPO.
ປີ 2017		ໃນວັນທີ 9 ພຶດສະພາ 2017, ທາງຄະນະກຳມະການຄຸ້ມຄອງຫລັກຊັບ ໄດ້ອອກແຈ້ງ ການ ເລກທີ 220/LSCO ເຖິງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໂດຍມີການ ແນະນຳໃຫ້ຫຼຸດ ມູນຄ່າ ຮຸ້ນກຳນົດ (par value) ຈາກ 2.000 ກີບ ມາ ເປັນ 1.000 ກີບ ຕໍ່ ຮຸ້ນ ແລະ ໃຫ້ມີການ ຫຼຸດ ທຶນຈົດທະບຽນ ຈາກ 700.000 ລ້ານກີບ ເປັນ 500.000 ລ້ານກີບ ເຊິ່ງສຳເລັດການ ປ່ຽນ ທຶນຈົດທະບຽນ ທີ່ກະຊວງ ອຸດສາຫະກຳ ແລະ ການຄ້າ ໃນວັນ ທີ 27 ເດືອນ 6 ປີ 2017. ໃນວັນທີ 02 ຕຸລາ 2017 ບໍລິສັດ ໄດ້ຈົດທະບຽນເພີ້ມທຶນ 82.000 ລ້ານກີບ ພາຍຫຼັງ ການອອກ ຈຳໜ່າຍຮຸ້ນ IPO ຈຶ່ງ ເຮັດໃຫ້ ທຶນຈົດທະບຽນຂອງ ບໍລິສັດ ທັງໝົດ ເປັນ 582.000 ລ້ານກີບ. ໃນ ວັນທີ 10 ຕຸລາ 2017 ເປັນມື້ທີ່ ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໄດ້ມີການ ຈົດທະບຽນເຂົ້າຕະຫລາດຫລັກຊັບລາວ ແລະ ເປັນມື້ເປີດຂາຍຮຸ້ນ ສາມັນ ມື້ທຳອິດ ຂອງບໍລິສັດ ຊຶ່ງມີຮຸ້ນສາມັນຈຳນວນ 82 ລ້ານຮຸ້ນ ໃນລາຄາ ກຳນົດ (par value) 1.000 ກີບ ຕໍ່ ຮຸ້ນ. ລາຄາ ເປີດໂຕ ແມ່ນ 1.300 ກີບຕໍ່ຮຸ້ນ ແລະ ປິດການຂາຍໃນມື້ດັ່ງກ່າວໃນລາຄາ 1.350 ກີບ.

II. ເປົ້າໝາຍຫລັກຂອງການດຳເນີນທຸລະກິດ

ວິໃສທັດ

ບໍລິສັດຕັ້ງເປົ້າໝາຍຈະກ້າວຂຶ້ນມາເປັນຜູ້ນຳທາງດ້ານການກໍ່ສ້າງ, ເຕັກໂນໂລຊີ ແລະ ການພັດທະນາພາຍໃນປະເທດແລະຈະຂະຫຍາຍທຸລະກິດໄປເຖິງຂົງເຂດປະຊາຄົມອາຊຽນໃນອະນາຄົດ.

ພາລະກິດ

ບໍລິສັດຕັ້ງໃຈຢ່າງຍິ່ງທີ່ຈະສະໜອງການບໍລິການໃຫ້ແກ່ລູກຄ້າ ໃນລະດັບສາກົນຢ່າງຮອບດ້ານ ເຊັ່ນ: ຄຸນນະພາບ, ທັນກັບເວລາ, ເອົາໃສ່ໃຈໃນລາຍລະອຽດ ແລະຊື່ສັດ ເປັນທຳ ຕໍ່ຄູ່ຮ່ວມງານແລະລູກຄ້າ.

ຄຸນຄ່າທີ່ພວກເຮົາຍຶດຖື:

P: ປະຕິບັດວຽກຢ່າງມີປະສິດທິພາບ
C: ຮັດແໜ້ນສາຍສຳພັນກັບຄູ່ຄ້າເປັນບຸລິມະສິດອັນດັບໜຶ່ງ.
D: ວຽກສຳເລັດຕາມກຳນົດເວລາ ແລະ ຮັບປະກັນຄຸນນະພາບ.

III. ໂຄງຮ່າງການຈັດຕັ້ງ

ສະພາບໍລິຫານ ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ / Board of Directors



ທ່ານ ສີທອງ ພົມມະຈິດ

ປະທານສະພາບໍລິຫານ

Mr. Sithong PHOMMACHITH

Chairman



ທ່ານ ບຸນມີ ມະນີວົງວົງ

ຮອງປະທານສະພາບໍລິຫານ / ສະມາຊິກອິດສະຫຼະ

Mr. Khanthavong DALAVONG

Vice Chairman / Independent Member



ທ່ານ ສີທາ ພົມມະຈິດ

ສະມາຊິກສະພາບໍລິຫານ/ ຜູ້ອຳນວຍການໃຫຍ່

Mr. Sitha PHOMMACHITH

Member / Chief Executive Officer



ທ່ານ ພູໂຂງ ອ້ວນລະມະນີ ສະມາຊິກ

ສະພາບໍລິຫານ

Mr. Phoukhong OUANLAMANY

Member



ທ່ານ ນັນທະລັດ ທິລະກຸນ

ສະມາຊິກອິດສະຫຼະ

Mr. Nanthalath THILAKUN

Member / Independent Member

ຄະນະຜູ້ອຳນວຍການໃຫຍ່

Managing Directors of PCD



ທ່ານ ສີທາ ພົມມະຈິດ
ຜູ້ອຳນວຍການໃຫຍ່
Mr. Sitha PHOMMACHITH
Chief Executive Officer



ທ່ານ ອຳໄพວັນ ຈັນທະຜາລີ
ຜູ້ຊ່ວຍຜູ້ອຳນວຍການໃຫຍ່ຝ່າຍປະຕິບັດການ
Mr. Amphaivanh CHANHTHAPHALY
Chief Operations Officer



ທ່ານ ອາໂນໄລ ສີຫາຣາດ
ຜູ້ຊ່ວຍຜູ້ອຳນວຍການໃຫຍ່ຝ່າຍການເງິນ
Mr. Anolay SIHARATH
Chief Financial Officer



ທ່ານ ດວງ ປະທຸມລັກ
ພະແນກ ຈັດຕັ້ງ ບໍລິຫານ
Mr. Duang PATHOUMLACK
Head of HR and Administration Department



ທ່ານ ພຸດທະເສນ ພົມມິໄຊ
ພະແນກ ພັດທະນາທຸລະກິດ ແລະ ການຕະຫຼາດ
Mr. Phoutthasen PHOMMIXAY
Head of Business Development and Marketing Department



ທ່ານ ວິລະຄົມ ພິລາກຸນ
ພະແນກ ອອກແບບ ແລະ ສຳຫລວດ
Mr. Vilakhom PHILAKOUN
Head of Design and Survey Department



ທ່ານ ເກດສະໜາ ຈັນທະວົງ
ພະແນກ ກໍ່ສ້າງ ເຕັກນິກ
Mr. Kethsana CHANHTHAVONG
Head of Construction and Monitoring Deparment



ທ່ານ ນາງ ໄธທອງ ພົມມະຈິດ
ພະແນກ ການບັນຊີ ການເງິນ
Mrs. Haithong PHOMMACHITH
Head of Finance and Accounting Deparment



ທ່ານ ບຸນທິດ ທອງສັກດີ
ພະແນກ ພະແນກສາງ
Mr. Bounthod THONGSACKDY
Head of Inventory Department



ທ່ານ ຄອນສະຫວັນ ທຳວົງສິດ
ພະແນກ ຈັດຊື້ຈັດຈ້າງ
Mr. Khonesavanh THAMVONGSITH
Head of Procurement Department


IV. ຄວາມຄືບຫນ້າການດຳເນີນທຸລະກິດໃນປີ 2020

ວຽກງານດ້ານບຸກຄະລາກອນ

ການດຳເນີນວຽກງານດ້ານບຸກຄະລາກອນໃນປີ 2020 ແມ່ນໄດ້ເນັ້ນນັກການຝຶກອົບຮົມ, ປັບປຸງໂຄງຮ່າງການຈັດຕັ້ງ ຂອງອົງກອນຈາກການເປັນບໍລິສັດຈຳກັດ ມາເປັນ ບໍລິສັດມະຫາຊົນ ເພື່ອໃຫ້ສອດຄ່ອງຕາມໂຄງສ້າງ ແລະ ເງື່ອນໄຂ ຂອງຕະຫຼາດຫຼັກຊັບລາວ.
ດ້ານສະຫວັດດີການສັງຄົມ, ການດູແລຊີວິດການເປັນຢູ່ຂອງພະນັກງານພາຍໃນອົງກອນໃຫ້ດີຂຶ້ນ ບໍລິສັດໄດ້ເຮັດ ການສຳຫຼວດເພື່ອກະກຽມສະຫນອງປະກັນສັງຄົມໃຫ້ແກ່ພະນັກງານທຸກຄົນ, ມີການກວດສຸຂະພາບປະຈຳປີ, ເຮັດ ວຽກຕາມວັນເວລາ ແລະ ມີມື້ລາພັກປະຈຳປີ ຕາມກົດໝາຍແຮງງານລາວວ່າງອອກ.

ຜົນງານຂອງໄຕມາດ ທີ 1

- ຈຳນວນພະນັກງານທັງໝົດຮອດວັນທີ: 31/12/2020 ມີຈຳນວນ 177 ຄົນ
- ການລາອອກ 0 ຄົນ
- ຖືກປົດອອກ 0 ຄົນ
- ຖືກເລື່ອນຕຳແໜ່ງ 0 ຄົນ



➢ **ເງິນເດືອນ ແລະ ສະຫວັດດີການ**

- ອັດຕາການເພີ່ມຂຶ້ນຂອງເງິນເດືອນ 0 %

➢ **ຈັດກິດຈະກຳສ້າງຄວາມອາມັກຄີໃນໝູ່ພະນັກງານ**

- ບໍ່ມີການຈັດກິດຈະກຳ
  - **ການສົ່ງເສີມສ້າງຄວາມອາດສາມາດໃຫ້ແກ່ພະນັກງານ**
- ບໍ່ມີການເຄື່ອນໄຫວ

ວຽກງານດ້ານການຕະຫລາດ

ເນື່ອງຈາກບໍລິສັດເປັນຜູ້ໃຫ້ບໍລິການວຽກງານວິສະວະກຳກໍ່ສ້າງແບບຄົບວົງຈອນ ໂດຍເນັ້ນການໃຫ້ບໍລິການໃນສ່ວນວຽກພື້ນຖານໂຄງລ່າງ ເຊິ່ງສ່ວນໃຫຍ່ເຈົ້າຂອງໂຄງການຈະເປັນໜ່ວຍງານພາກລັດ ດັ່ງນັ້ນ, ການເຮັດການຕະຫຼາດຂອງບໍລິສັດຈະເນັ້ນໄປຍັງກຸ່ມເປົ້າໝາຍໜ່ວຍງານພາກລັດ ແລະ ເອກະຊົນ ໂດຍເນັ້ນການສົ່ງມອບໂຄງການທີ່ມີຄຸນະພາບ ທັນກັບເວລາ ເຊິ່ງເປັນປັດໄຈຫຼັກທີ່ຈະເຮັດໃຫ້ເຈົ້າຂອງໂຄງການມີຄວາມເຊື່ອໝັ້ນໃນຄຸນະພາບຂອງໂຄງການທີ່ບໍລິສັດເປັນຜູ້ກໍ່ສ້າງ ລວມເຖິງເປັນການສ້າງໂອກາດໃຫ້ບໍລິສັດໄດ້ຮັບວຽກເພີ່ມຕື່ມຈາກໜ່ວຍງານພາກລັດດັ່ງກ່າວ ນອກເໜືອຈາກນີ້, ບໍລິສັດຍັງຕ້ອງສ້າງຄວາມສຳພັນອັນດີກັບໜ່ວຍງານພາກລັດ ໃນການໃຫ້ຂໍ້ມູນ ແລະ ແລກປ່ຽນຂໍ້ມູນທາງດ້ານວິຊາການທີ່ກ່ຽວກັບການກໍ່ສ້າງ ລວມເຖິງການສຶກສາ ຊອກຄົ້ນພື້ນທີ່ ເພື່ອພັດທະນາໂຄງການການກໍ່ສ້າງເສັ້ນທາງເພີ່ມຕື່ມ ອັນເປັນການເຮັດການຕະຫຼາດ ເຊິ່ງສິ່ງຜົນໃຫ້ບໍລິສັດມີໂອກາດອັນດີທີ່ຈະໄດ້ວຽກປະມູນໃນໂຄງການຕ່າງ ເພີ່ມຕື່ມອີກດ້ວຍ.

ໃນປະຈຸບັນ PCD ແມ່ນໄດ້ສືບຕໍ່ຈັດຕັ້ງປະຕິບັດໂຄງການທີ່ຍັງບໍ່ທັນສຳເລັດ 2 ໂຄງການຄື: ໂຄງການກໍ່ສ້າງທາງ ປູຢາງ 2 ຊັ້ນ ແຕ່ບ້ານອູ້ ນະຄອນຫຼວງພະບາງ ຫາ ບ້ານ ສີບຸນເຮືອງ ເມືອງ ນານ ແຂວງຫຼວງພະບາງລວງຍາວ 50.2 ກິໂລແມດ ແລະ ໂຄງການກໍ່ສ້າງທາງຍີກລະດັບ ແຕ່ບ້ານກ໋ອເຈຍ ຫາ ບ້ານເມືອງຮຶບ ເມືອງໂພນທອງ ແຂວງຫຼວງພະບາງ ຄວາມຍາວ 32.565 ກິໂລແມັດ.

- ໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ປາກເຊເຊິ່ງມີມູນຄ່າ ປະມານ 4 ຕື້ກວ່າໂດລາ ແລະ ພວກເຮົາ ບໍລິສັດພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ກໍ່ແມ່ນໜຶ່ງໃນ 4 ບໍລິສັດທີ່ໄດ້ຮັບການຂັດເລືອກເຂົ້າຮອບສຸດທ້າຍແມ່ນການສຳຫຼວດອອກແບບແລວທາງແມ່ນສຳເລັດແລ້ວປະຈຸບັນແມ່ນກະຊວງໂຍທາ ແລະ ຂົນສົ່ງກຳລັງກະກຽມຍື່ນແບບຕໍ່ລັດຖະບານເພື່ອຮັບຮອງ.
- ໝູ່ບ້ານຈັດສັນສະໄໝໃໝ່ສຳລັບບຸກຄົນທົ່ວໄປທີ່ມີລາຍໄດ້ຕ່ຳ ຈຳນວນ 200,000 ຫລັງໃນທົ່ວປະເທດ, ແມ່ນຍັງຊອກຫາຄູ່ຮ່ວມທຶນຈາກຕ່າງປະເທດ.
- ໂຄງການປ້ອງກັນຕາຝັ່ງເຈື່ອນໄລຍະທີສອງຄວາມຍາວ 8,3 ກມ ນະຄອນຫຼວງວຽງຈັນ (ຮັບເໝົ່າຕໍ່ຈາກບໍລິສັດ ເກົ່າຫຼີ) ແມ່ນໄດ້ຢື່ນເອກກະສານແລ້ວ ແລະ ປະຈຸບັນແມ່ນລໍຖ້າການເປີດຊອງປະມູນ.
- ໂຄງການກໍ່ສ້າງພື້ນຖານໂຄງລ່າງເຂດເສດຖະກິດພິເສດ ຫຼວງພະບາງ ມູນຄ່າ 2,5 ລ້ານໂດລາສະຫະລັດ ແມ່ນລໍຖ້າເຈົ້າຂອງໂຄງການປັກຫຼັກໝາຍເຂດແດນ ແລະ ຊົດເຊີຍຜົນກະທົບສິ່ງແວດລ້ອມແລ້ວຈຶ່ງສາມາດຈັດຕັ້ງປະຕິບັດໄດ້.

ລັກສະນະກຸ່ມລູກຄ້າເປົ້າໝາຍ

ກຸ່ມລູກຄ້າເປົ້າໝາຍຂອງບໍລິສັດສາມາດແບ່ງໄດ້ເປັນລູກຄ້າຈາກພາກລັດ ແລະ ພາກເອກະຊົນ ໂດຍສະເພາະແມ່ນການກໍ່ສ້າງພື້ນຖານໂຄງລ່າງທີ່ຢູ່ໃນເຂດພາກເໜືອຂອງປະເທດເປັນສ່ວນໃຫຍ່ ແລະ ຂະຫຍາຍໄປຍັງແຂວງອື່ນໆ ຫຼື ໃນຂົງເຂດທົ່ວປະເທດ. ແຜນການຕະຫຼາດ ແມ່ນເນັ້ນໜັກ ໃສ່ ພາກເອກະຊົນ ແລະ ຂະແໜງ ການພັດທະນາໃນການກໍ່ສ້າງໂຄງການຂະໜາດນ້ອຍ, ກາງ, ແລະ ໃຫຍ່ ຕາມລຳດັບ.

- **ການຊອກຫາໂຄງການ**

ຊ່ອງທາງການຈັດຈຳໜ່າຍຂອງບໍລິສັດແມ່ນໄດ້ມີການຮັບວຽກກໍ່ສ້າງຈາກພາກລັດໂດຍກົງ ທັ້ງໂດຍການຍື່ນຊອງປະມູນເພື່ອສະເໜີລາຄາ ແລະ ການເຈລະຈາຕໍ່ລອງວຽກທີ່ຕ້ອງຕົກລົງກັບເຈົ້າຂອງໂຄງການ ໂດຍບໍລິສັດຈະໄດ້ຮັບຊອງປະມູນໂຄງການ ເພື່ອນຳມາປະມວນສະເໜີລາຄາຕາມຂໍ້ກຳນົດ ໃນບາງຄັ້ງບໍລິສັດໄດ້ສະເໜີໂຄງການໄປຍັງເຈົ້າຂອງໂຄງການໂດຍກົງ ເພື່ອພິຈາລະນາອະນຸມັດໂຄງການກໍ່ສ້າງເສັ້ນທາງດັ່ງກ່າວ. ແຕ່ທັ້ງນັ້ນ, ທາງເຈົ້າຂອງໂຄງການ ຕ້ອງເຂົ້າມາກວດສອບຄວາມເປັນໄປໄດ້ຂອງການກໍ່ສ້າງເສັ້ນທາງ ຫຼື ໂຄງການ ດັ່ງກ່າວ. ເພື່ອສຶກສາຄວາມເປັນໄປໄດ້ໃນໂຄງການນັ້ນໆ. ເພື່ອເປັນການຫຼຸດຄວາມສ່ຽງຈາກການແຂ່ງຂັນໃນການປະມູນໂຄງການ.

- **ກົນລະຍຸດການແຂ່ງຂັນ**

ບໍລິສັດແມ່ນມີນະໂຍບາຍທີ່ຈະເພີ່ມວຽກງານກໍ່ສ້າງໃຫ້ຫຼາຍເພີ່ມຂຶ້ນ ທັ້ງໃນຮູບແບບຂອງໂຄງການທາງພາກລັດ ແລະ ເອກະຊົນ ເພື່ອເຮັດໃຫ້ບັນລຸເປົ້າໝາຍຫຼັກຂອງບໍລິສັດ ເປັນບໍລິສັດຜູ້ນຳທາງດ້ານການກໍ່ສ້າງ ແລະ ພັດທະນາໃນປະເທດ ແລະ ຈະຂະຫຍາຍທຸລະກິດໄປເຖິງຂົງເຂດປະຊາຄົມອາຊຽນ. ບໍລິສັດໄດ້ພັດທະນາກົນລະຍຸດຂອງການແຂ่งຂັນເອົາໄວ້ດັ່ງຕໍ່ໄປນີ້ ເຊິ່ງຊ່ວຍໃຫ້ເກີດປະໂຫຍດໃນດ້ານການແຂ่งຂັນ ແລະ ເພື່ອບັນລຸເປົ້າໝາຍຂອງບໍລິສັດ.

ກ. ບໍລິສັດຮັບເໝົາກໍ່ສ້າງແບບຄົງວົງຈອນ

ບໍລິສັດເປັນບໍລິສັດຮັບເໝົາກໍ່ສ້າງແບບຄົງວົງຈອນ ແລະ ມີຄວາມພ້ອມໃນການສະເໜີໂຄງການ ຫຼື ມີຄວາມພ້ອມໃນການເຂົ້າປະມູນໂຄງການທັ້ງຂອງໂຄງການພາກລັດ ແລະ ພາກເອກະຊົນ ເຮັດໃຫ້ສົ່ງຜົນດີຕໍ່ຜົນປະກອບການ ຈະເຮັດໃຫ້ບໍລິສັດສາມາດເຂົ້າເປັນສ່ວນໜຶ່ງໃນຜູ້ນຳດ້ານອຸດສາຫະກຳການກໍ່ສ້າງຊັ້ນນຳຂອງປະເທດ ເລືອກລົງທຶນໃນອຸດສາຫະກຳພື້ນຖານໂຄງລ່າງເປັນຫຼັກ ແລະ ໂຄງການໃນພາກອະສັງຫາລິມະຊັບ ແນໃສ່ຄວາມຮູ້ ຄວາມຊ່ຽວຊານດ້ານເຕັກນິກການກໍ່ສ້າງຂອງບຸກຄະລາກອນ, ການນຳໃຊ້ເຕັກໂນໂລຊີການກໍ່ສ້າງທີ່ທັນສະໄໝ ແນໃສ່ການແຂ่งຂັນໃນໂຄງການທີ່ມີຂະໜາດໃຫຍ່ ແລະ ສະລັບຊັບຊ້ອນຫຼາຍຂຶ້ນ. ການມີແຫຼ่งວັດສະດຸກໍ່ສ້າง ແລະ ແຮงงานທີ່ມີປະສິບການ ໃນການກໍ່ສ້າงຢ่างกว้างขวาง, ອັນເຮັດໃຫ້ເປັນຜົນສຳເລັດຂອງບໍລິສັດ.

ຂ. ຄຸນະພາບ ແລະ ມາດຕະຖານຂອງວຽກງານ

ການຮັກສາຄຸນະພາບ ແລະ ມາດຕະຖານຂອງວຽກงาน ເປັນເຫດຜົນຫຼັກທີ່ບໍລິສັດປະສົບຜົນສຳເລັດທີ່ມາຈາກປະຫວັດການດຳເນີນວຽกงานที่ดีของบໍລິສັດ ທັ้งในด้านการเร็ดวຽกให้แล้วตามกำหนดเวลา, ความน่าเชื่อถือ และคุณะพาบของวຽกงาน มีความสามาดในการดำเนินงานตามสัญญา และ การบริการลูกค้าด้วยน้ำใจให้เป็นย่างดี เอาใจใส่ในรายละเอียด และ ซื่สัดต่อลูกค้า.

ຄ. ການສົ่งมอบให้ทันกับเวลาที่กำหนด

ວຽกงานก่อสร้างพื้นฐานโครงล่าง โดยสะเพาะแม่นถะหมินหินทางเป็นวຽกที่ใหย่ ต้องใช้ไลยะเวลายาวนานพอสมควน บໍລິสัดแม่นต้องการสົ่งมอบงานให้ทันกับเวลา ในแบบแผนการที่ได้กำหนดไว้ เชิ่งบໍລິสัดเองแม่นมีชื่สຽงในด้านการสົ่งมอบงานในกົ่งกับเวลาถือได้ว่าเป็นหนึ่งปัดไจหลักในการประสมผลสำเร็ดของทุระกิดรับเหมาก่อสร้างที่ต้องใช้ความรับผิดชอบที่สูงมาเป็นไลยะเวลายาวนาน

ບໍລິສັດແມ່ນມີການບໍລິຫານງານຢ່າງເປັນລະບົບ ມີການວາງແຜນງານທຸກຂັ້ນຕອນ ພັດທະນາສັກກະຍະພາບການເຮັດວຽກຂອງບຸກຄະລາກອນຢ່າງຕໍ່ເນື່ອງ ເພື່ອໃຫ້ການປະຕິບັດງານມີປະສິດທິພາບ ແລະ ສຳເລັດພາຍໃນລະຍະເວລາທີ່ກຳນົດໄວ້.

ງ. ເອົາໃຈໃສ່ໃນລາຍລະອຽດຂອງໂຄງການ

ບໍລິສັດແມ່ນມີການເອົາໃຈໃສ່ໃນລາຍລະອຽດໂຄງການຢ່າງຮອບຄອບໃນໂຄງການຕ່າງໆ ດ້ວຍຜູ້ບໍລິ ຫານ ແລະ ນັກວິສະວະກອນທີ່ມີປະສົບການສູງ, ມີຄວາມຊຳນານໃນການກໍ່ສ້າງຂົວ-ທາງ ແລະ ກໍ່ສ້າງອື່ນໆ ເພື່ອກວດສອບກິດຈະກຳໃນວຽກການກໍ່ສ້າງແຕ່ລະໂຄງການ ເຊິ່ງຊ່ວຍໃຫ້ບໍລິສັດມີການປັບປຸງປະສິດທິພາບຢູ່ສະເໝີ ແລະ ຫຼຸດຜ່ອນຕົ້ນທຶນການກໍ່ສ້າງໃນຮູບແບບຕ່າງໆ. ນອກຈາກນີ້, ບໍລິສັດມີແຜນວຽກງານທີ່ຈະບັນລຸເປົ້າໝາຍໂດຍພັດທະນາທາງດ້ານແນວຄິດໃນດ້ານການບໍລິຫານ, ການນຳໃຊ້ເຕັກໂນໂລຊີສະໄໝໃໝ່ ເພື່ອຊ່ວຍໃນການປັບປຸງປະສິດທິພາບ ແລະ ຫຼຸດຜ່ອນຕົ້ນທຶນການກໍ່ສ້າງໃນຮູບແບບຕ່າງໆຕໍ່ໄປ.

ຈ. ຊື່ສັດ ເປັນທຳ ຕໍ່ຄູ່ຮ່ວມງານ

ການທີ່ບໍລິສັດແມ່ນມີຄວາມ ຊື່ສັດ ຈິງໃຈ ແລະ ເປັນທຳ ກັບພາກສ່ວນທີ່ກ່ຽວຂ້ອງທັ້ງໃນພາກສ່ວນທີ່ກ່ຽວຂ້ອງກັບເຈົ້າຂອງໂຄງການ ທັ້ງຜູ້ອອກແບບ ແລະ ຜູ້ຄວບຄຸມວຽກ ເນື່ອງຈາກວ່າຜູ້ອອກແບບເປັນຜູ້ບຸກຄົນທີ່ຮູ້ກ່ຽວກັບລາຍລະອຽດຂອງໂຄງການກໍ່ສ້າງຕ່າງໆ ເຊິ່ງການທີ່ ຊື່ສັດ ຈິງໃຈ ຍ້ອນເຫດຜົນນີ້ເອງ ຕັ້ງແຕ່ອະດີດທີ່ຜ່ານມາ ຈຶ່ງເຮັດໃຫ້ບໍລິສັດກ້າວຂຶ້ນເປັນບໍລິສັດທີ່ມີຊື່ສຽງ, ມີຄວາມສະນິດສະນົມກັບລູກຄ້າ ມີສາຍສຳພັນທີ່ດີກັບຜູ້ອອກແບບ ຜູ້ຄວບຄຸມວຽກ ແລະ ຄູ່ຮ່ວມງານທຸກຝ່າຍມາໂດຍຕະຫຼອດ.

ສ. ການໄດ້ຮັບຄວາມເຊື່ອຖື ແລະ ໄວ້ວາງໃຈຈາກລູກຄ້າ

ຈາກຜົນງານຄວາມສຳເລັດໃນອະດີດທີ່ຜ່ານມາຂອງບໍລິສັດ ແມ່ນໄດ້ຮັບຄວາມໄວ້ວາງໃຈຈາກລູກຄ້າ ໄດ້ເປັນຢ່າງດີ ເຮັດໃຫ້ບໍລິສັດແມ່ນໄດ້ຮັບການຍອມຮັບຈາກລູກຄ້າເຈົ້າຂອງໂຄງການ. ແລະໄດ້ຮັບການຕິດຕໍ່ຈາກໜ່ວຍງານພາກລັດໃຫ້ບໍລິສັດເຂົ້າຮ່ວມປະມູນໂຄງການຢ່າງຕໍ່ເນື່ອງ.

ວຽກງານດ້ານຍຸດທະສາດອົງກອນ

ຈາກຄວາມຕັ້ງໃຈໃນການມອບສິ່ງທີ່ດີທີ່ສຸດ ສູ່ຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈທີ່ໄດ້ຮັບຈາກລູກຄ້າ, ພວກເຮົາພ້ອມແລ້ວທີ່ຈະກ້າວໄປສູ່ເປົ້າໝາຍໃນອະນາຄົດ:

- ຂະຫຍາຍຖານລູກຄ້າໄປສູ່ພາກເອກກະຊົນ ທັ້ງໃນໂຄງການກໍ່ສ້າງແລະພັດທະນາພື້ນຖານໂຄງລ່າງຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່.
- ລິເລີ່ມໂຄງການພັດທະນາອະສັງຫາລິມະຊັບເພື່ອຕອບສະໜອງການຂະຫຍາຍຕົວຂອງຕົວເມືອງໃນທົ່ວປະເທດ.
- ຮັກສາຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈຈາກຖານລູກຄ້າທີ່ໄດ້ຮັບມາຕະຫຼອດໄລຍະເກືອບ 20 ປີ ດ້ວຍການໃຫ້ຄວາມສຳຄັນກັບຄຸນນະພາບ, ມາດຕະຖານ ການສົ່ງມອບງານກົງເວລາ ແລະ ບໍລິການທີ່ຊື່ສັດ ໃສ່ໃຈທຸກລາຍລະອຽດ.

ການມອບພັນທະອາກອນ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໄດ້ດຳເນີນງານພາຍໃຕ້ກົດໝາຍກົດໝາຍຂອງ ສປປລາວ ຕະຫລອດມາ ໂດຍສະເພາະກົດໝາຍ ວ່ອຍສາອາກອນໄດ້ປະຕິບັດຢ່າງເຂັ້ມງວດ ໂດຍຈະເຫັນໄດ້ຈາກຕາຕະລາງການມອບພັນທະດ້ານຫລຸ່ມນີ້.

ການມອບພັນທະອາກອນໃຫ້ລັດປະຈຳ 6 ເດືອນຕົ້ນ ປີ 2020

ລ/ດ	ລາຍການ	ຫົວໜ່ວຍ	ຈຳນວນເງິນ (ກີບ)
1	ອາກອນມູນຄ່າເພີ່ມ		573,030,630
2	ອາກອນເງິນເດືອນ		30,336,000
3	ອາກອນກຳໄລ		158,860,089
	ລວມ		**762,226,719**

ໝາຍເຫດ: ສຳລັບຕົວເລກຜົນການດຳເນີນທຸລະກິດ ແມ່ນອີງຕາມເອກະສານລາຍງານການເງິນ

ຜູ້ອຳນວຍການໃຫຍ່
ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ທ່ານ ສິທາ ພົມມະຈິດ

ບໍລິສັດພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ



ເອກະສານລາຍງານການເງິນ

ວັນທີ 31 ທັນວາ 2020

www.pwc.com/la

pwc

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ອຳນວຍການ ຂອງ ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ຄຳເຫັນ

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນ ຂອງ ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ບໍລິສັດ) ໄດ້ຖືກກະກຽມ, ສະແດງ ສະຖານະທາງການເງິນຂອງບໍລິສັດ ຢ່າງຖືກຕ້ອງ ໂດຍສອດຄ່ອງກັບນະໂຍບາຍການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ໃນເອກະສານລາຍງານການເງິນສະບັບນີ້.

ການກວດສອບຂອງພວກເຮົາມີ

ເອກະສານລາຍງານການເງິນຂອງ ບໍລິສັດ ປະກອບດ້ວຍ:

- ໃບລາຍງານຖານະການເງິນ ວັນທີ 31 ທັນວາ 2020
- ໃບລາຍງານຜົນໄດ້ຮັບ ສຳລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານສ່ວນປ່ຽນແປງທຶນ ສຳລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດມື້ດຽວກັນ ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ສັງລວມຫຼັກການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ ມາດຕະຖານໄດ້ລະບຸໄວ້ໃນ ຫົວຂໍ້ "ຄວາມຮັບຜິດຊອບ ຂອງຜູ້ກວດສອບອິດສະຫຼະສຳລັບການກວດສອບ ເອກະສານລາຍງານການເງິນ" ຂອງບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫຼັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການອອກຄວາມເຫັນຂອງ ພວກເຮົາ.

ຄວາມເປັນອິດສະຫຼະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກບໍລິສັດ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນ ອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນ ນານາຊາດ ສຳລັບນັກບັນຊີ (IESBA Code). ພວກເຮົາໄດ້ປະຕິບັດຕາມ ຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

pwc

ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານ ການບັນຊີ

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງພື້ນຖານການກະກຽມເອກະສານລາຍງານການເງິນ. ພື້ນຖານການບັນຊີທີ່ຖືກນຳໃຊ້ໃນການກະກຽມບົດລາຍງານການເງິນສະບັບນີ້ ອາດມີຄວາມແຕກຕ່າງກັບ ຈາກຫຼັກການບັນຊີ ມາດຕະຖານການລາຍງານການເງິນສາກົນ ("IFRS"). ດັ່ງນັ້ນ, ຜູ້ທີ່ນຳໃຊ້ ຄວນມີຄວາມເຂົ້າໃຈວ່າ ເອກະສານລາຍງານການເງິນນີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດຕາມ IFRS. ທັ້ງນີ້ຄວາມເຫັນ ຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິງນັ້ນ.

ເລື່ອງສຳຄັນໃນການກວດສອບ

ເລື່ອງສຳຄັນໃນການກວດສອບ ຄື ເລື່ອງຕ່າງໆ ທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດຂອງພວກເຮົາໃນການກວດສອບເອກະສານລາຍງານການເງິນສຳລັບປີສິ້ນສຸດນີ້. ພວກເຮົາໄດ້ນຳເນື້ອໃນສຳຄັນເຫຼົ່ານີ້ມາລວມໃນການກວດສອບເອກະສານລາຍງານການເງິນ ຄື ຄ່າເຜື່ອບັນຊີໜີ້ສົງໄສຈະສູນ ເພື່ອສະແດງຄວາມເຫັນຂອງພວກເຮົາ ພ້ອມນີ້ພວກເຮົາບໍ່ໄດ້ສະແດງຄວາມເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບ
ຄ່າເຜື່ອບັນຊີໜີ້ສົງໄສຈະສູນ *ອີງຕາມບົດອະທິບາຍທີ 2.4 'ສະຫຼຸບລວມວິທີການບັນຊີທີ່ສຳຄັນ - ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ' ແລະ ບົດອະທິບາຍທີ 6 'ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ' ໃນເອກະສານລາຍງານການເງິນ* ໃນວັນທີ 31 ທັນວາ 2020 ໜີ້ຕ້ອງຮັບທາງການຄ້າ - ລັດຖະບານ ຂອງ ສປປ ລາວ (ລັດຖະບານ) ເຊິ່ງເປັນລູກຄ້າລາຍດຽວຂອງ ບໍລິສັດ ທີ່ມີຍອດຄ້າງຊຳລະ ຈຳນວນ 312,270 ລ້ານກີບ ຫັກຄ່າເຜື່ອໜີ້ສົງໄສຈະສູນຈຳນວນ 304,903 ລ້ານກີບ ຄິດເປັນເປີເຊັນ 49% ຂອງ ຊັບສິນທັງໝົດໃນເອກະສານລາຍງານການເງິນ, ເຊິ່ງໄດ້ສະແດງມູນຄ່າຍັງເຫຼືອຕາມບັນຊີສຸດທິ ຈຳນວນ 7,367 ລ້ານກີບ. ເງື່ອນໄຂການຊຳລະເງິນຂຶ້ນຢູ່ກັບງົບປະມານປະຈຳປີຂອງ ລັດຖະບານ ໃນລະຫວ່າງປີ ລັດຖະບານໄດ້ຈຳກັດງົບປະມານເຊິ່ງເປັນຜົນໃຫ້ການຊຳລະເງິນໃນລະຫວ່າງປີມີພຽງ 6,303 ລ້ານກີບ ຈົນເຖິງວັນທີຂອງບົດລາຍງານ, ສິ່ງຜົນກະທົບຕໍ່ທຶນໝຸນວຽນ. ໃນປະຈຸບັນບໍລິສັດ ຢູ່ລະຫວ່າງການເຈລະຈາເງື່ອນໄຂໃໝ່ໃນການຊຳລະເງິນກັບລັດຖະບານ, ຜູ້ບໍລິຫານໄດ້ພິຈາລະນາ ຕັ້ງຄ່າເຜື່ອໜີ້ສົງໄສຈະສູນຕາມມູນຄ່າທີ່ຄາດວ່າຈະໄດ້ຮັບຄືນ. ຈຳນວນທີ່ຄາດວ່າຈະໄດ້ຮັບຄືນເປັນການປະເມີນໂດຍອ້າງອີງເຖິງ ອາຍຸ ແລະ ປະຫວັດຂອງການຊຳລະ.	ຂັ້ນຕອນສຳຄັນຂອງພວກເຮົາລວມເຖິງຕໍ່ໄປນີ້: • ສອບຖາມຜູ້ບໍລິຫານກ່ຽວກັບວິທີການທີ່ໃຊ້ ລວມເຖິງຂໍ້ສົມມຸດຕິຖານ ແລະ ສ້າງຄວາມເຂົ້າໃຈກ່ຽວກັບຂັ້ນຕອນຂອງຜູ້ບໍລິຫານ ແລະ ນະໂຍບາຍສຳລັບການຕັ້ງຄ່າເຜື່ອໜີ້ສົງໄສຈະສູນ; • ກວດສອບຄວາມຖືກຕ້ອງຂອງອາຍຸລູກໜີ້ໃນທ້າຍປີ ຕາມພື້ນຖານຕົວຢ່າງ; • ກວດສອບເອກະສານປະກອບ ເຊັ່ນໃບຢັ້ງຢືນການສຳເລັດວຽກງານທີ່ຮອງຮັບໂດຍລັດຖະບານ ເພື່ອໃຫ້ໝັ້ນໃຈວ່າ ລັດຖະບານຍອມຮັບຄວາມຄືບໜ້າຂອງວຽກງານ; • ປະເມີນຄວາມສາມາດໃນການເກັບກູ້ຄືນຂອງໜີ້ທີ່ຍັງບໍ່ໄດ້ຊຳລະຕາມຕົວຢ່າງພື້ນຖານໂດຍຜ່ານການປະເມີນຜົນຂອງຜູ້ບໍລິຫານຂອງການປະເມີນຂອງພວກເຮົາ ໂດຍອ້າງອີງເຖິງຂໍ້ມູນປະຫວັດສິນເຊື່ອຂອງລູກຄ້າ, ຮູບແບບປະຫວັດການຊຳລະຂອງລູກຄ້າ, ຂໍ້ມູນຂ່າວສານທີ່ມີຕໍ່ສາທາລະນະ ແລະ ການຕິດຕໍ່ພົວພັນຫຼ້າສຸດກັບລູກຄ້າ ແລະ ພິຈາລະນາຄືນຖ້າວ່າຕ້ອງມີການຕັ້ງສຳຮອງເພີ່ມຕື່ມ; ແລະ • ກວດສອບການຊຳລະທີ່ຕາມມາຂອງລູກໜີ້ການຄ້າ ຫຼັງຈາກວັນທີ່ຂອງໃບລາຍງານຖານະການເງິນຕາມພື້ນຖານຕົວຢ່າງ, ຖ້າມີ.

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບ
ພວກເຮົາໃຫ້ຄວາມສຳຄັນໃນເລື່ອງນີ້ ເນື່ອງຈາກໜີ້ຕ້ອງຮັບທາງການຄ້າມີຄວາມສຳຄັນຕໍ່ເອກະສານລາຍງານການເງິນ ແລະ ຄ່າເຜື່ອໜີ້ສົງໄສຈະສູນ ຂຶ້ນຢູ່ກັບການພິຈາລະນາຂອງຜູ້ບໍລິຫານໃນການປະເມີນສະຖານະການ ແລະ ເງື່ອນໄຂຂອງລູກໜີ້ການຄ້າ ເພື່ອພິຈາລະຄວາມສາມາດໃນການຊຳລະໜີ້ໃຫ້ບໍລິສັດ.	ຈາກຂັ້ນຕອນຂ້າງເທິງ ພວກເຮົາໄດ້ສ້າງຄວາມເຂົ້າໃຈກັບຕົວເອງ ວ່າຜູ້ບໍລິຫານໄດ້ໃຊ້ການພິຈາລະນາຢ່າງສົມເຫດສົມຜົນ ທີ່ມີຫຼັກຖານສຳຄັນປະກອບໃນສ່ວນຂອງຍອດເຫຼືອໜີ້ຕ້ອງຮັບທີ່ກ່ຽວຂ້ອງ. ພວກເຮົາບໍ່ພົບບັນຫາໃດໆ ຜ່ານຂັ້ນຕອນການກວດສອບເຫຼົ່ານີ້ ເຊິ່ງລະບຸວ່າການຕັ້ງສຳຮອງໃນສ່ວນຂອງໜີ້ຕ້ອງຮັບທາງການຄ້າບໍ່ເໝາະສົມ.

ຂໍ້ມູນອື່ນ

ຜູ້ອຳນວຍການ ມີຄວາມຮັບຜິດຊອບຕໍ່ຂໍ້ມູນອື່ນເຊິ່ງປະກອບມີ ຂໍ້ມູນລວມຢູ່ໃນເອກະສານລາຍງານປະຈຳປີແຕ່ບໍ່ລວມເຖິງເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບທີ່ຢູ່ໃນເອກະສານລາຍງານນັ້ນ. ພວກເຮົາຄາດວ່າຈະໄດ້ຮັບເອກະສານລາຍງານການເງິນປະຈຳປີພາຍຫຼັງວັນທີຂອງບົດລາຍງານຂອງຜູ້ກວດສອບ.

ຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນບໍ່ຄອບຄຸມເຖິງຂໍ້ມູນອື່ນ ແລະ ບໍ່ໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນອື່ນ.

ຄວາມຮັບຜິດຊອບຂອງພວກເຮົາຕໍ່ການກວດສອບເອກະສານລາຍງານການເງິນຄື ການອ່ານ ແລະ ພິຈາລະນາວ່າຂໍ້ມູນອື່ນທີ່ມີຄວາມຂັດແຍ່ງທີ່ເປັນສາລະສຳຄັນ ກັບເອກະສານລາຍງານການເງິນ ຫລື ກັບຄວາມຮູ້ທີ່ໄດ້ມາຈາກການກວດສອບຂອງພວກເຮົາ ຫຼື ເຫັນວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນ ຫຼື ບໍ່.

ຫາກພວກເຮົາພົບວ່າມີການສະແດງຂໍ້ມູນທີ່ຜິດຕໍ່ຄວາມເປັນຈິງໃນບົດລາຍງານປະຈຳປີ. ພວກເຮົາຕ້ອງໄດ້ແຈ້ງໃຫ້ຄະນະກຳມະການກວດສອບຮັບຮູ້.

ຄວາມຮັບຜິດຊອບ ຂອງຜູ້ອຳນວຍການ ແລະ ຄະນະກຳມະການກວດສອບ ຕໍ່ເອກະສານລາຍງານການເງິນ

ຜູ້ອຳນວຍການ ມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນ ແລະ ນຳສະເໜີ ໂດຍສອດຄ່ອງກັບ ຫຼັກການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ອຳນວຍການໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນທີ່ປາສະຈາກ ການລາຍງານບໍ່ຖືກຕ້ອງ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ອຳນວຍການ ມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງບໍລິສັດ ໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບບໍລິສັດ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການກວດສອບ ໄດ້ຊ່ວຍຜູ້ອຳນວຍການ ເບິ່ງແຍງຂັ້ນຕອນໃນການກະກຽມເອກະສານລາຍງານການເງິນ.

pwc

ຄວາມຮັບຜິດຊອບ ຂອງຜູ້ກວດສອບ ສຳລັບການກວດສອບເອກະສານລາຍງານການເງິນ

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນ ເຊິ່ງລວມທັງການອອກຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ, ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ, ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ. ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ແທດເໝາະກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ອຳນວຍການ.
- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ອຳນວຍການ ແລະ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີຜົນໃຫ້ເກີດຂໍ້ສົງໄສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງບໍລິສັດ ຫຼືບໍ່ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານການເງິນ, ຖ້າຫາກການເປີດເຜີຍ ດັ່ງກ່າວ ບໍ່ພຽງພໍຈະເຮັດໃຫ້ ການອອກຄວາມເຫັນຂອງພວກເຮົາຈະປ່ຽນແປງໄປຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍ່ຕາມ ເຫດການ ຫຼື ສະພາບຕົວຈິງໃນອະນາຄົດອາດເປັນສາເຫດໃຫ້ບໍລິສັດບໍ່ສາມາດດຳເນີນການໄດ້ຢ່າງຕໍ່ເນື່ອງ.

ພວກເຮົາໄດ້ສື່ສານກັບຄະນະກຳມະການການກວດສອບກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກພ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫລັກຈັນຍາບັນກ່ຽວຂ້ອງກັບຄວາມເປັນອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດ ລວມເຖິງເລື່ອງອື່ນທີ່ພວກເຮົາເຊື່ອວ່າມີເຫດຜົນທີ່ ບຸກຄົນພາຍນອກອາດພິຈາລະນາເຖິງການກະທົບຕໍ່ຄວາມເປັນອິດສະຫຼະຂອງພວກເຮົາ ແລະ ຫຼັກການທີ່ພວກເຮົາໃຊ້ເພື່ອປ້ອງກັນການຂາດຄວາມເປັນອິດສະຫຼະ.

pwc

ຈາກເລື່ອງທີ່ສື່ສານກັບຄະນະກຳມະການກວດສອບ ພວກເຮົາໄດ້ພິຈາລະນາເລື່ອງຕ່າງໆທີ່ເປັນສາລະສຳຄັນ ທີ່ສຸດໃນການກວດສອບ ເອກະສານລາຍງານການເງິນຄັ້ງນີ້ ແລະ ກຳນົດເປັນເລື່ອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍເລື່ອງເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບ. ຍົກເວັ້ນກົດໝາຍ ຫຼື ຂໍ້ບັງຄັບບໍ່ໃຫ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງດັ່ງກ່າວ ຫຼື ໃນສະພາບການທີ່ຍາກຈະເກີດຂຶ້ນ ພວກເຮົາພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດດັ່ງກ່າວສາມາດຄາດການໄດ້ຢ່າງສົມເຫດສົມຜົນວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດ ຕໍ່ສ່ວນໄດ້ເສຍສາທາລະນະຈາກການສື່ສານດັ່ງກ່າວ.

ບໍລິສັດ ພຣາຍວໍເຕີ້ເຮົ້າສ໌ກຸບເປີ້ສ (ລາວ) ຈຳກັດຜູ້ດຽວ.

ອະພິສິດ ທ່ຽງຕິງພົນໄຍ
ຜູ້ຖືຮຸ້ນ

ວຽງຈັນ, ສປປ ລາວ
ວັນທີ 15 ມີນາ 2021

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ໃບລາຍງານຖານະການເງິນ
ວັນທີ 31 ທັນວາ 2020

ຊັບສິນ	ບິດ ອະທິບາຍ	2020 ລ້ານກີບ	2019 ລ້ານກີບ
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	5	88	195
ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	6	138,017	181,442
ເຄື່ອງໃນສາງ		320	318
ຊັບສິນໝຸນວຽນອື່ນໆ	7	10,676	7,698
ລວມຊັບສິນໝຸນວຽນ		**149,101**	**189,653**
ຊັບສິນບໍ່ໝຸນວຽນ			
ຊັບສິນບັດຄົງທີ່ ມີຕົວຕົນ, ສຸດທິ	8	470,366	474,530
ເງິນໃຫ້ກູ້ຢືມໄລຍະຍາວແກ່ພາກສ່ວນທີ່ກ່ຽວຂ້ອງ	9	861	861
ລວມຊັບສິນບໍ່ໝຸນວຽນ		**471,227**	**475,391**
ລວມຊັບສິນ		**620,328**	**665,044**
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	10	47,973	45,743
ພາກສ່ວນຂອງເງິນກູ້ຢືມໄລຍະຍາວ - ສະຖາບັນການເງິນ	11	38,422	38,422
ພາກສ່ວນຂອງເງິນກູ້ຢືມໄລຍະຍາວ - ພາກສ່ວນທີ່ກ່ຽວຂ້ອງ	11	8,000	4,200
ໜີ້ຕ້ອງສົ່ງອາກອນກຳໄລ	12	12,971	8,486
ໜີ້ສິນໝຸນວຽນອື່ນໆ	13	52,834	46,323
ລວມໜີ້ສິນໝຸນວຽນ		**160,200**	**143,174**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ - ພາກສ່ວນທີ່ກ່ຽວຂ້ອງ	11	8,000	11,800
ເງິນກູ້ຢືມໄລຍະຍາວ - ພາກສ່ວນທີ່ກ່ຽວຂ້ອງ		**8,000**	**11,800**
ລວມໜີ້ສິນບໍ່ໝຸນວຽນ		**168,200**	**154,974**
ທຶນ			
ທຶນຈົດທະບຽນ	14	582,000	582,000
ສ່ວນເກີນມູນຄ່າຮຸ້ນ	14	12,540	12,540
ກຳໄລ/(ຂາດທຶນ)ສະສົມ			
ສຳຮອງຕາມລະບຽບການ	15	11,572	11,572
ບໍ່ໄດ້ຈັດສັນ		(153,984)	(96,042)
ລວມທຶນ		**452,128**	**510,070**
ລວມໜີ້ສິນ ແລະ ທຶນ		**620,328**	**665,044**

ທ່ານ ສີທາ ພົມມະຈິດ
ຜູ້ອຳນວຍການໃຫຍ່
ວັນທີ: 15 ມີນາ 2021

ທ່ານ ອະໄນໄລ ສີໜໍ່ລາດ
ຫົວໜ້າການເງິນ
ວັນທີ: 15 ມີນາ 2021

ບິດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແຕ່ໜ້າ 10-24 ເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານຜົນໄດ້ຮັບ
ສຳລັບຫ້າຍປີສິ້ນສຸດວັນທີ 31 ທັນວາ 2020

	ບິດ ອະທິບາຍ	2020 ລ້ານກີບ	2019 ລ້ານກີບ
ລາຍໄດ້ຈາກການກໍ່ສ້າງ		2,647	5,590
ຕົ້ນທຶນໃນການກໍ່ສ້າງ		(5,149)	(7,603)
ກຳໄລເບື້ອງຕົ້ນ		**(2,502)**	**(2,013)**
ລາຍຮັບອື່ນໆ		2,995	4,109
ລາຍຮັບ(ຂາດທຶນ)ຈາກການດ້ອຍຄ່າ, ສຸດທິ		(40,754)	1,941
ລາຍຈ່າຍບໍລິຫານ		(2,727)	(3,361)
ຂາດທຶນຈາກອັດຕາແລກປ່ຽນ		(2,220)	(796)
ລາຍຈ່າຍດອກເບ້ຍ	18	(8,091)	(8,521)
ຂາດທຶນ ກ່ອນລາຍຈ່າຍອາກອນກຳໄລ		**(53,299)**	**(8,641)**
ລາຍຈ່າຍອາກອນກຳໄລ	19	(4,643)	(149)
ຂາດທຶນ ສຳລັບປີ		**(57,942)**	**(8,790)**
ກຳໄລຕໍ່ຮຸ້ນ			
(ຂາດທຶນ) ພື້ນຖານຕໍ່ຮຸ້ນ	20	(99.56)	(15.10)

ທ່ານ ສີທາ ພົມມະຈິດ
ຜູ້ອຳນວຍການໃຫຍ່
ວັນທີ: 15 ມີນາ 2021

ທ່ານ ອະໂນໄລ ສີທາລາດ
ຫົວໜ້າການເງິນ
ວັນທີ: 15 ມີນາ 2021

ບິດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແຕ່ໜ້າ 10-24 ເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານສ່ວນປ່ຽນແປງທຶນ
ສຳລັບທ້າຍປີສິ້ນສຸດວັນທີ 31 ທັນວາ 2020

	ຍອດ ອະທິບາຍ	ທຶນຈົດທະບຽນ (ຍົດອະທິບາຍ 14) ລ້ານກີບ	ສ່ວນເພີ່ມ ມູນຄ່າຮຸ້ນ (ຍົດອະທິບາຍ 14) ລ້ານກີບ	ກຳໄລ/(ຂາດທຶນ) ສະສົມ ສຳຮອງຕາມລະບຽບ ການ (ຍົດອະທິບາຍ 15) ລ້ານກີບ	ກຳໄລ/(ຂາດທຶນ)ສະ ສົມລ່ຳ(ແບ່ງປັນ ລ້ານກີບ	ລວມ ລ້ານກີບ
ຍອດຍົກມາໃນວັນທີ 1 ມັງກອນ 2020		582,000	12,540	11,572	(96,042)	510,070
ຂາດທຶນສຳລັບປີ		-	-	-	(57,942)	(57,942)
ຍອດຄົງເຫຼືອວັນທີ 31 ທັນວາ 2020		**582,000**	**12,540**	**11,572**	**(153,984)**	**452,128**
ຍອດຍົກມາໃນວັນທີ 1 ມັງກອນ 2019		582,000	12,540	11,572	(87,252)	518,860
ຂາດທຶນສຳລັບປີ		-	-	-	(8,790)	(8,790)
ຍອດຄົງເຫຼືອວັນທີ 31 ທັນວາ 2019		**582,000**	**12,540**	**11,572**	**(96,042)**	**510,070**

ທ່ານ ສີທາ ພິມມະຈິດ
ຜູ້ອຳນວຍການໃຫຍ່
ວັນທີ: 15 ມີນາ 2021

ທ່ານ ອະໄນໄລ ສີທັນດາດ
ຫົວໜ້າການເງິນ
ວັນທີ: 15 ມີນາ 2021

ຍົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແຕ່ໜ້າ 10-24 ເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານກະແສເງິນສົດ
ສຳລັບທ້າຍປີສິ້ນສຸດວັນທີ 31 ທັນວາ 2020

	ບົດ ອະທິບາຍ	2020 ລ້ານກີບ	2019 ລ້ານກີບ
ກະແສເງິນສົດ ຈາກກິດຈະກຳການດຳເນີນງານ:			
ຂາດທຶນກ່ອນອາກອນກຳໄລສຳລັບປີ		(53,299)	(8,641)
ການດັດແກ້			
ຂາດທຶນຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ		2,257	-
ຄ່າຫຼ້ຍຫ້ຽນ	8	4,164	4,190
ຄ່າເຊື່ອມມູນຄ່າ		-	5
ລາຍຈ່າຍດອກເບ້ຍ	18	8,091	8,521
ຄ່າເຜື່ອບັນຊີໜີ້ສິງໄສຈະສູນ		41,821	(1,941)
ຂາດທຶນຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ		**3,034**	**2,134**
ການປ່ຽນແປງທຶນໝຸນວຽນ:			
- ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		1,604	6,087
- ເຄື່ອງໃນສາງ		(2)	5
- ຊັບສິນໝຸນວຽນອື່ນໆ		(2,977)	(3,625)
- ໜີ້ຕ້ອງສິ່ງທາງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ		(28)	(2,408)
- ໜີ້ສິນໝຸນວຽນອື່ນໆ		(400)	5,489
ເງິນສົດທີ່ໄດ້ມາຈາກການກິດຈະກຳດຳເນີນງານ		1,231	7,682
ອາກອນກຳໄລທີ່ຕ້ອງຈ່າຍ		(159)	(143)
ເງິນສົດທີ່ໄດ້ມາຈາກກິດຈະກຳດຳເນີນງານ, ສຸດທິ		**1,072**	**7,539**
ເງິນສົດທີ່ໄດ້ມາຈາກຈາກກິດຈະກຳການລົງທຶນ:			
ເງິນສົດຈ່າຍເພື່ອຊື້ຊັບສິນບັດຄົງທີ່ ມີຕິວຕົນ		-	(8)
ເງິນສົດສຸດທິ ໃຊ້ໄປໃນກິດຈະກຳ ການລົງທຶນ		**-**	**(8)**
ເງິນສົດທີ່ໄດ້ມາຈາກກິດຈະກຳການເງິນ			
ລາຍຮັບຈາກການກູ້ຢືມ	11	3,200	10,515
ຊຳລະຄືນເງິນກູ້ຢືມ	11	(3,200)	(9,600)
ຈ່າຍດອກເບ້ຍ		(1,179)	(8,305)
ກະແສເງິນສົດຈາກກິດຈະກຳການເງິນ, ສຸດທິ		**(1,179)**	**(7,390)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ (ຫຼຸດລົງ), ສຸດທິ		(107)	141
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ	5	195	54
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		-	-
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນທ້າຍປີ	5	**88**	**195**

ທ່ານ ສີທາ ພົມມະຈິດ
ຜູ້ອຳນວຍການໃຫຍ່
ວັນທີ: 15 ມີນາ 2021

ທ່ານ ອະໂນໄລ ສີຫາລາດ
ຫົວໜ້າການເງິນ
ວັນທີ: 15 ມີນາ 2021

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແຕ່ໜ້າ 10-24 ເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

1. ຂໍ້ມູນທົ່ວໄປ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ແມ່ນບໍລິສັດມະຫາຊົນ ທີ່ຢູ່ຈົດທະບຽນຂອງບໍລິສັດແມ່ນຕັ້ງຢູ່ ໂຮງແຮມ ຄອນຕິແນນ ໂທ ພຣາຊ່າ, ບ້ານໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ ສປປ ລາວ.

ບໍລິສັດດຳເນີນກິດຈະການດ້ານການກໍ່ສ້າງ, ສ້ອມແປງ ແລະ ບຸລະນະຫົນທາງ, ຂົວ ແລະ ອື່ນໆ, ມີພຽງລູກຄ້າດຽວ ກໍ່ຄື ລັດຖະບານ ຂອງ ສປປ ລາວ (ລັດຖະບານ).

ບໍລິສັດ ໄດ້ຈົດທະບຽນເຂົ້າຕະຫຼາດຫຼັກຊັບ ໃນວັນທີ 10 ຕຸລາ 2017.

ເອກະສານລາຍງານທາງການເງິນນີ້ໄດ້ຜ່ານການອະນຸມັດໂດຍຄະນະຜູ້ບໍລິຫານ ໃນວັນທີ 15 ມີນາ 2021.

2. ນະໂຍບາຍການບັນຊີທີ່ສຳຄັນ

ນະໂຍບາຍທາງການບັນຊີທີ່ໄດ້ນຳໃຊ້ໃນການກະກຽມເຂົ້າໃນເອກະສານລາຍງານການເງິນມີດັ່ງລຸ່ມນີ້:

2.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ໄດ້ມີການກະກຽມຕາມວິທີການບັນຊີຂອງບໍລິສັດທີ່ໄດ້ລະບຸໄວ້ ໃນບົດອະທິບາຍຊ້ອນທ້າຍຂໍ້ ທີ 2 ຂອງເອກະສານລາຍງານການເງິນສະບັບນີ້ ເຊິ່ງໄດ້ມີການສ້າງຂຶ້ນ ບົນພື້ນຖານຕົ້ນທຶນເດີມ.

ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດ ສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານການເງິນສາກົນ (IFRS), ເຖິງຢ່າງໃດກໍ່ຕາມ, ກະຊວງ ການເງິນໄດ້ອອກແຈ້ງການສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສຳນັກງານຄະນະກຳມະການ ຄຸ້ມຄອງຫຼັກຊັບ (ສຄຄຊ) ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສຳລັບ PIEs ໃນການຈັດການເຮັດແຜນ ປະຕິບັດການ ສຳລັບການນຳ IFRS ມາໃຊ້ພາຍໃນໄລຍະເວລາສີ່ປີ. ຊຶ່ງໃນຂະນະນີ້ຜູ້ບໍລິຫານກຳລັງກະກຽມແຜນປະຕິບັດ ການ ສຳລັບການດຳເນີນການຕາມ IFRS ຕາມແຈ້ງການ.

ຫຼັກການບັນຊີທີ່ນຳໃຊ້ອາດແຕກຕ່າງຢ່າງມີສາລະສຳຄັນ ຈາກຫຼັກການບັນຊີ IFRS. ຄວາມແຕກຕ່າງເຫຼົ່ານີ້ແມ່ນ: ສັນຍາເຊົ່າ ,ລາຍຮັບ, ຕົ້ນທຶນຂອງເງິນກູ້, ຜົນປະໂຫຍດຂອງພະນັກງານ, ຜົນກະທົບຂອງການປ່ຽນແປງໃນອັດຕາແລກປ່ຽນເງິນຕາ ຕ່າງປະເທດ ແລະ ອາກອນກຳໄລ ແລະ ອາກອນກຳໄລເລື່ອນຊຳລະ.

ການສ້າງເອກະສານລາຍງານການເງິນແມ່ນ ຜູ້ບໍລິຫານໄດ້ສ້າງການຄາດຄະເນ ແລະ ວາງການສົມມຸດຖານຫຼາຍປະການ ເພື່ອສະ ແດງເຖິງຜົນກະທົບຕໍ່ມູນຄ່າຂອງຊັບສິນ ແລະ ໜີ້ສິນ ທີ່ໄດ້ລາຍງານ ແລະ ຈຳນວນເງິນ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາ ທີ່ໄດ້ລາຍງານ. ສະນັ້ນ ຕົວເລກທີ່ຄາດຄະເນໄວ້ນັ້ນ ສ້າງຂຶ້ນບົນພື້ນຖານຄວາມຮູ້ທີ່ດີທີ່ສຸດ ຂອງຝ່າຍບໍລິຫານ ກ່ຽວກັບ ເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ຊຶ່ງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນເບື້ອງຕົ້ນ.

ຂໍ້ສົມມຸດຖານການດຳເນີນງານຕໍ່ເນື່ອງ

ສຳລັບປີສິ້ນສຸດວັນທີ 31 ທັນວາ 2020 ບໍລິສັດພົບກັບການຂາດທຶນສຸດທິ ຈຳນວນ 57,942 ລ້ານກີບ (2019: 8,790 ລ້ານ ກີບ). ອີງຕາມການຊຳລະເງິນຂອງລູກຄ້າທີ່ລ່າຊ້າ ແລະ ຢູ່ລະຫວ່າງຂະບວນການການເຈລະຈາ ສຳລັບການກຳນົດເວລາຊຳລະ ເງິນໃໝ່ ແຕ່ຍັງບໍ່ມີວິທີແກ້ໄຂບັນຫາໃນວັນທີ່ລາຍງານ.

2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

2.1 ພື້ນຖານໃນການກະກຽມ (ຕໍ່)

ຂໍ້ສົມມຸດຖານການດຳເນີນງານຕໍ່ເນື່ອງ (ຕໍ່)

ພາກສ່ວນທີ່ກ່ຽວຂ້ອງ ແລະ ຜູ້ຖືຮຸ້ນລາຍໃຫຍ່ ອອກໜັງສືສະໜັບສະໜຸນໃຫ້ແກ່ບໍລິສັດ ໂດຍຍອມຮັບຄວາມຮັບຜິດຊອບໃນການຈັດຫາ ແລະ ດຳເນີນການເພື່ອໃຫ້ຄວາມຊ່ວຍເຫຼືອທາງການເງິນທີ່ພຽງພໍ ແລະ ກຳນົດເລື່ອນການຊຳລະເງິນໃຫ້ແກ່ບໍລິສັດ ເມື່ອມີຄວາມຈຳເປັນ ເພື່ອໃຫ້ບໍລິສັດສາມາດດຳເນີນງານຕໍ່ໄປໄດ້ ແລະ ປະຕິບັດພັນທະຜູກພັນທາງການເງິນທັງໃນປັດຈຸບັນ ແລະ ອະນາຄົດ ຈົນກວ່າບໍລິສັດຈະມີຖານະການເງິນທີ່ພຽງພໍ. ດັ່ງນັ້ນ ເອກະສານລາຍງານການເງິນນີ້ຈຶ່ງສ້າງຂຶ້ນຕາມຫຼັກການດຳເນີນງານຕໍ່ເນື່ອງ.

2.2 ການແລກປ່ຽນເງິນຕາຕ່າງປະເທດ

ທຸກລາຍການເຄື່ອນໄຫວໃນເອກະສານລາຍງານການເງິນ ແມ່ນ ຖືກແປງຄ່າເປັນສະກຸນເງິນ ລາວກີບ (ກີບ).

ລາຍການທີ່ເປັນສະກຸນເງິນຕາຕ່າງປະເທດ ແມ່ນ ຖືກແປງຄ່າເປັນສະກຸນເງິນກີບ ໂດຍໃຊ້ອັດຕາແລກປ່ຽນຂອງມື້ທີ່ມີລາຍການເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທາງການໃນສະກຸນເງິນຕາຕ່າງປະເທດ ແມ່ນ ຖືກແປງຄ່າເປັນສະກຸນເງິນກີບ ໂດຍໃຊ້ອັດຕາແລກປ່ຽນໃນມື້ຂອງໃບລາຍງານຖານະການເງິນ. ລາຍການກຳໄລ ແລະ ລາຍການຂາດທຶນທີ່ເກີດຈາກອັດຕາແລກປ່ຽນ ແລະ ການແປງຄ່າຊັບສິນ ແລະ ໜີ້ສິນທາງການເງິນ ແມ່ນໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບ.

2.3 ເງິນສົດ ແລະ ລາຍການທຽບເທົ່າເງິນ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ລວມກັນເປັນເງິນສົດໃນມື, ເງິນຝາກທະນາຄານ ແລະ ເງິນລົງທຶນໄລຍະສັ້ນ ທີ່ມີສະພາບຄ່ອງສູງ ເຊິ່ງມີອາຍຸການຄົບກຳນົດໃນ 3 ເດືອນ ຫຼື ໜ້ອຍກວ່າ ແລະ ເງິນເບີກເກີນບັນຊີ. ຢູ່ໃນໃບລາຍງານຖານະການເງິນ ເງິນເບີກເກີນບັນຊີແມ່ນສະແດງເປັນເງິນກູ້ຢືມໃນໜີ້ສິນໝຸນວຽນ, ຖ້າມີ.

2.4 ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

ໜີ້ຕ້ອງຮັບທາງການຄ້າ ແມ່ນຖືກບັນທຶກຕາມຕົວຈິງຂອງມູນຄ່າໃນໃບເກັບເງິນ ແລະ ການປະເມີນມູນຄ່າຕໍ່ມາ ແມ່ນນຳມູນຄ່າຍັງເຫຼືອລົບເງິນທີ່ຫັກເພື່ອໜີ້ສົງໄສຈະສູນ ຕາມຍອດເຫຼືອໃນວັນສິ້ນປີ, ຝ່າຍບໍລິຫານພິຈາລະນາຕັ້ງຄ່າເພື່ອໜີ້ສົງໄສຈະສຳລັບຍອດເຫຼືອຄ້າງຫຼາຍກວ່າ 3 ປີ.

ບໍ່ມີການຕັ້ງສຳຮອງເງິນກູ້ຢືມແກ່ກິດຈະການທີ່ກ່ຽວຂ້ອງກັບຍອດເຫຼືອລູກໜີ້ການຄ້າ ແລະ ລູກໜີ້ອື່ນໆຈາກກິດຈະການທີ່ກ່ຽວຂ້ອງ.

2.5 ເຄື່ອງໃນສາງ

ເຄື່ອງໃນສາງສະແດງອອກ ຕາມລາຄາທີ່ຕ່ຳກວ່າລະຫວ່າງລາຄາຕົ້ນທຶນ ແລະ ລາຄາຂາຍອອກສຸດທິ. ຕົ້ນທຶນ ໄດ້ນຳໃຊ້ວິທີສະເລ່ຍຕາມນ້ຳໜັກ, ຕົ້ນທຶນຊື້ ປະກອບດ້ວຍລາຄາຊື້ ແລະ ຄ່າໃຊ້ຈ່າຍທາງກົງ ທີ່ຕິດພັນກັບການຊື້ເຄື່ອງໃນສາງ ເຊັ່ນ: ຄ່າທຳນຽມທີ່ກ່ຽວຂ້ອງກັບການນຳເຂົ້າ, ຄ່າຂົນສົ່ງ ລົບ ທຸກສ່ວນຫຼຸດທີ່ໄດ້ຮັບ. ມູນຄ່າ ສຸດທິທີ່ຄາດວ່າຈະໄດ້ຮັບແມ່ນລາຄາສິນຄ້າຄົງເຫຼືອ ສາມາດຮັບຮູ້ໄດ້ ໃນໄລຍະປົກກະຕິຂອງທຸລະກິດ ຫຼັງຈາກຫັກຕົ້ນທຶນ ໃນການຂາຍອອກ. ຄ່າສູນເສຍມູນຄ່າເກີດຂຶ້ນ. ໃນກໍລະນີ ສິນຄ້າເຄື່ອນໄຫວຊ້າ ຫຼື ລ້າສະໄໝ, ເສຍຄຸນເຄື່ອງໃນສາງອື່ນໆ.

2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

2.6 ທີ່ດິນ ແລະ ອຸປະກອນ

ຊັບສິນມີຕົວຕົນທັງໝົດ. ສິ່ງປຸກສ້າງ ແລະ ອຸປະກອນແມ່ນໄດ້ຖືກບັນທຶກຕາມມູນຄ່າຕົ້ນທຶນເດີມ ຫັກຄ່າຫຼ້ຍຫ້ຽນສະສົມ. ມູນຄ່າຕົ້ນທຶນເດີມ ລວມມີລາຍຈ່າຍໂດຍກົງເພື່ອການໄດ້ມາຂອງລາຍການນັ້ນໆ.

ຄ່າໃຊ້ຈ່າຍທີ່ເກີດຂຶ້ນພາຍຫຼັງທີ່ກ່ຽວກັບລາຍການຂອງຊັບສົມບັດຄົງທີ່ໄດ້ຖືກເພີ່ມເຂົ້າໃນມູນຄ່າຕາມບັນຊີຂອງຊັບສິນເມື່ອ ມີຄວາມແນ່ໃຈວ່າຈະເກີດປະໂຫຍດທາງເສດຖະກິດໃນອານາຄົດເກີນກ່ວາການປະເມີນຜົນການດຳເນີນງານທີ່ມີຢູ່ຂອງຊັບສິນເຂົ້າສູ່ບໍລິສັດ ແລະ ມູນຄ່າຕາມບັນຊີຂອງລາຍຈ່າຍດັ່ງກ່າວ ແມ່ນບໍ່ໄດ້ຮັບຮູ້. ຄ່າສ້ອມແປງ ແລະ ບຳລຸງຮັກສາ ແມ່ນຈະສະແດງໃນໃບລາຍງານຜົນໄດ້ຮັບໃນລະຫວ່າງໄລຍະທາງການເງິນ ເມື່ອລາຍການນັ້ນເກີດຂຶ້ນ.

ທີ່ດິນບໍ່ໄດ້ຄິດຄ່າຫລຸ້ຍຫ້ຽນ. ຄ່າຫລຸ້ຍຫ້ຽນແມ່ນໄດ້ຄິດໄລ່ໂດຍການຄິດໄລ່ຄ່າຫຼ້ຍຫ້ຽນບົນຫຼັກການ ການຄິດໄລ່ ແບບຄົງຕົວ ເພື່ອຈັດສັນກັບມູນຄ່າຍັງເຫຼືອ ຂອງແຕ່ລະລາຍການຊັບສິນຕາມອາຍຸການໃຊ້ງານທີ່ຄາດຄະເນມີດັ່ງຕໍ່ໄປນີ້:

ປະເພດຊັບສິນ	ປີ
ອາຄານ	10
ພາຫະນະ	10
ອຸປະກອນຫ້ອງການ	5
ເຟີນີເຈີ ແລະ ສິ່ງທີ່ຕິດຕັ້ງຖາວອນ	5

ກຳໄລ ແລະ ຂາດທຶນ ຈາກການຂາຍຊັບສິນຄົງທີ່ໄດ້ຖືກກຳນົດໂດຍການສົມທຽບລາຄາຂາຍ ກັບ ມູນຄ່າຕາມບັນຊີ ແລະ ຮັບຮູ້ເຂົ້າໃນຂາດທຶນ/ກຳໄລສຸດທິອື່ນໆ ໃນໃບລາຍງານຜົນໄດ້ຮັບ.

2.7 ເງິນກູ້ຢືມ

ເງິນກູ້ຢືມ ແມ່ນຮັບຮູ້ເບື້ອງຕົ້ນຕາມຈຳນວນເງິນທີ່ໄດ້ຮັບ.

ເງິນກູ້ຢືມ ຈັດເປັນໜີ້ສິນໝຸນວຽນ ເວັ້ນເສຍແຕ່ ບໍລິສັດ ບໍ່ມີເງື່ອນໄຂ ໂດຍການເຍື່ອນຊຳລະໜີ້ສິນ ຢ່າງໜ້ອຍ 12 ເດືອນ ຫຼັງວັນທີຂອງໃບສະຫຼຸບຊັບສົມບັດ.

ຕົ້ນທຶນຂອງການກູ້ຢືມອື່ນໆທັງຫມົດ ແມ່ນໄດ້ບັນທຶກໃນໃບລາຍງານຜົນໄດ້ຮັບ ໃນໄລຍະທີ່ລາຍການນັ້ນເກີດຂຶ້ນ.

2.8 ການຮັບຮູ້ລາຍຮັບ

ລາຍຮັບລວມມີມູນຄ່າໃນໃບເກັບເງິນສຸດທິຂອງສ່ວນຫຼຸດທີ່ໄດ້ຮັບ. ລາຍຮັບຈາກການກໍ່ສ້າງ ແລະ ບໍລິການ ຮັບຮູ້ເມື່ອມີຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນເຈົ້າຂອງສິນຄ້າແມ່ນຖືກໂອນ ຫຼື ຖືກສົ່ງໃຫ້ຜູ້ຊື້.

ລາຍຮັບອື່ນໆ ແມ່ນໄດ້ຮັບຮູ້ອີງຕາມພື້ນຖານ ດັ່ງລຸ່ມນີ້:

- ລາຍຮັບຈາກດອກເບ້ຍແມ່ນຮັບຮູ້ຕາມອັດຕາພື້ນຖານຄິດໄລ່ຕາມໄລຍະເວລາ, ຄິດໄລ່ຈາກບັນຊີເງິນຕົ້ນທີ່ຍັງຄ້າງ ແລະ ອັດຕາດອກເບ້ຍໃນຊ່ວງເວລາທີ່ກຳນົດ, ເມື່ອມີຄວາມແນ່ນອນວ່າລາຍໄດ້ຈະເກີດຂຶ້ນກັບບໍລິສັດ.
- ລາຍຮັບອື່ນໆແມ່ນຮັບຮູ້ໃນເກນຄ້າງຮັບຄ້າງຈ່າຍ.

2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

2.9 ອາກອນ

ບໍລິສັດໄດ້ບັນທຶກອາກອນກຳໄລ ຕາມເກນຄົງຄ້າງ. ບໍລິສັດບໍ່ໄດ້ບັນທຶກອາກອນກຳໄລຕ້ອງຈ່າຍ ຫຼື ຕ້ອງຮັບໃນອະນາຄົດ ເຊິ່ງເກີດຈາກສ່ວນຜິດຕ່າງຊົ່ວຄາວ. ປັດຈຸບັນມີທີ່ແຕກຕ່າງໃນການປະຕິບັດທາງອາກອນ ໃນ ສປປ ລາວ. ອາກອນລາຍໄດ້ຈະຖືກຮັບຮູ້ຂຶ້ນຢູ່ກັບຜົນການດຳເນີນງານໃນປີ ຫຼັງ ການດັດແກ້ ສຳລັບ ລາຍຈ່າຍທີ່ບໍ່ສາມາດຫັກ ແລະ ລາຍການເຄື່ອນໄຫວອື່ນໆ ພາຍໃຕ້ກົດໝາຍສ່ວຍສາອາກອນ ໃນອັດຕາອາກອນທີ່ກ່ຽວຂ້ອງ ຫຼື ລາຍຮັບຈາກການຂາຍ ຫຼື ການບໍລິການຄຸ້ມກັບອັດຕາຜົນກຳໄລ ທີ່ກຳນົດລ່ວງໜ້າ ແລະ ອັດຕາອາກອນກຳໄລ. ອີງຕາມການປະຕິບັດ ຂອງການຊຳລະອາກອນ ລະຫວ່າງບໍລິສັດ ແລະ ໜ່ວຍງານສ່ວຍສາອາກອນ, ອາກອນກຳໄລຈະຖືກຄິດໄລ່ຕາມບົດອະທິບາຍຂໍ້ 19.

ໃນ ສປປ ລາວ ອາກອນລາຍໄດ້ຕ້ອງໄດ້ຮັບການກວດກາຄືນຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ບົນພື້ນຖານທົ່ວໄປ, ການກວດກາຄືນດັ່ງກ່າວອາດຈະຕ້ອງມີຄຳເຫັນ ແລະ ຕີລາຄາ ໂດຍພາກສ່ວນທີ່ກ່ຽວຂ້ອງ ເຊິ່ງອາດຈະມີຜົນກະທົບຕໍ່ກັບບໍລິສັດ ແລະ ອາດສົ່ງຜົນໃຫ້ເກີດການຊຳລະອາກອນເພີ່ມເຕີມ ຫຼື ຮັບຄືນ ໃນຄວາມຈຳເປັນ. ເຫດນີ້ຈະມີຜົນໃນການຈ່າຍເງິນ ຫຼື ຮັບຄືນ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍອາກອນລາຍໄດ້ໃນປີ ທີ່ມີການກວດສອບໄດ້ສຳເລັດ.

2.10 ເງິນແຮ

ເງິນແຮ ຖືກບັນທຶກບັນຊີ ໃນເວລາມີພັນທະໃນປະຈຸບັນຕາມກົດໝາຍ ຫຼື ພັນທະການກໍ່ສ້າງ ເຊິ່ງເກີດຈາກເຫດການຜ່ານມາ, ເປັນໄປໄດ້ວ່າ ແຫຼ່ງຊັບພະຍາກອນຈະໄຫຼອອກເພື່ອສະສາງພັນທະ ແລະ ຈຳນວນເງິນສາມາດຄາດຄະເນຢ່າງໜ້າເຊື່ອຖືໄດ້, ຍົກເວັ້ນເງິນແຮ ເພື່ອຜົນປະໂຫຍດພະນັກງານ ຕາມທີ່ໄດ້ອະທິບາຍຂໍ້ 2.11.

2.11 ຜົນປະໂຫຍດພະນັກງານ

ອີງຕາມກົດໝາຍແຮງງານ ສປປ ລາວ, ເມື່ອພະນັກງານຈະບຳນານ ໂດຍຄົບກຳນົດ ແລະ ເງື່ອນໄຂທີ່ ກຳນົດໄວ້ໃນກົດໝາຍແຮງງານ. ເພາະສະນັ້ນບໍລິສັດຈະມີພັນທະທີ່ຕ້ອງຈ່າຍເງິນບຳນານ.

ເງິນແຮ ສຳລັບຜົນປະໂຫຍດພະນັກງານທັງໝົດບໍ່ໄດ້ຮັບຮູ້ເປັນໜີ້ສິນໃນແຕ່ລະປີ. ໜີ້ສິນ ແລະ ລາຍຈ່າຍສຳລັບຜົນປະໂຫຍດພະນັກງານຈະຮັບຮູ້ໃນໃບສະຫລຸບຊັບສິນບັດ ແລະ ໃນໃບລາຍງານຜົນໄດ້ຮັບ ຕາມຈຳນວນທີ່ເກີດຂຶ້ນຈິງ ທີ່ຮອດກຳນົດເວລາບຳນານ.

3. ເຫດການສຳຄັນທີ່ເກີດຂຶ້ນໃນລະຫວ່າງປີ

ການລະບາດຂອງພະຍາດ ໂຄໂລນ່າໄວຣັສ 2019 ("ໂຄວິດ-19") ໃນຕົ້ນປີ 2020, ເຊິ່ງມີຜູ້ຕິດເຊື້ອຈຳນວນຫຼວງຫຼາຍ. ມາດຕະການຕ່າງໆໂດຍລັດຖະບານທີ່ໄດ້ອອກເພື່ອຄວບຄຸມໄວຣັສໄດ້ສົ່ງຜົນກະທົບຕໍ່ກິດຈະກຳທາງເສດຖະກິດ. ບໍລິສັດໄດ້ປະຕິບັດຫຼາຍມາດຕະການເພື່ອຕິດຕາມກວດກາ ແລະ ປ້ອງກັນຜົນກະທົບຂອງໄວຣັສ COVID-19 ເຊັ່ນມາດຕະການດ້ານຄວາມປອດໄພ ແລະ ສຸຂະພາບສຳລັບບຸກຄະລາກອນຂອງພວກເຮົາ (ເຊັ່ນວ່າການເວັ້ນໄລຍະຫ່າງຈາກສັງຄົມ ແລະ ການເຮັດວຽກຢູ່ບ້ານ) ແລະ ຮັບປະກັນຄວາມປອດໄພເມື່ອມີການສະໜອງວັດຖຸດິບທີ່ຈຳເປັນຕໍ່ຂະບວນການດຳເນີນງານ.

ໃນຂັ້ນຕອນດັ່ງກ່າວ, ຜົນກະທົບຕໍ່ທຸລະກິດ ແລະ ຜົນໄດ້ຮັບມີຈຳກັດ. ບໍລິສັດຈະສືບຕໍ່ປະຕິບັດຕາມນະໂຍບາຍ ແລະ ຄຳແນະນຳຕ່າງໆຂອງສະຖາບັນແຫ່ງຊາດ ແລະ ຄຽງຄູ່ກັນໄປຈະພະຍາຍາມຢ່າງເຕັມທີ່ເພື່ອສືບຕໍ່ດຳເນີນງານໃຫ້ດີທີ່ສຸດ ແລະ ປອດໄພເທົ່າທີ່ຈະເປັນໄປໄດ້ໂດຍບໍ່ສ່ຽງຕໍ່ສຸຂະພາບຂອງບຸກຄະລາກອນຂອງພວກເຮົາ.

3. ເຫດການສຳຄັນທີ່ເກີດຂຶ້ນໃນລະຫວ່າງປີ (ຕໍ່)

ນັບແຕ່ວັນທີ 4 ພຶດສະພາ 2020, ລັດຖະບານໄດ້ຈັດຕັ້ງປະຕິບັດການປົດປະເທດ, ບັນດາຫ້ອໜ່ວຍທຸລະກິດກໍ່ໄດ້ຮັບອະນຸຍາດໃຫ້ສືບຕໍ່ດຳເນີນງານຕໍ່ໄປ. ດັ່ງນັ້ນ, ຜູ້ບໍລິຫານຈຶ່ງເຊື່ອ ແລະ ໝັ້ນໃຈວ່າ ບໍ່ມີຜົນກະທົບຢ່າງມີສາລະສຳຄັນຕໍ່ເອກະສານລາຍງານການເງິນ ຂອງບໍລິສັດ ສຳລັບທ້າຍປີສິ້ນສຸດວັນທີ 31 ທັນວາ 2020.

ປັດຈຸບັນ ບໍລິສັດໄດ້ຕິດຕາມສະຖານະການຂອງໂຄວິດ-19 ຢ່າງໃກ້ຊິດ ໂດຍປະເມີນຜົນກະທົບດັ່ງກ່າວຕໍ່ການດຳເນີນງານພ້ອມກັບວາງແຜນຍຸດທະສາດໃນການແກ້ໄຂບັນຫາຢ່າງມີປະສິດທິຜົນ.

4. ການປະມານການທາງບັນຊີ, ສົມມຸດຖານ ແລະ ການພິຈາລະນາຢ່າງມີສາລະສຳຄັນ

ການປະມານການ, ສົມມຸດຖານ ແລະ ການພິຈາລະນາ ໄດ້ມີການປະເມີນທົບທວນຢ່າງຕໍ່ເນື່ອງໂດຍອີງຕາມປະສົບການທີ່ມີມາໃນອະດີດ ແລະ ປັດໄຈອື່ນໆ ລວມເຖິງການປະເມີນເຫດການໃນອະນາຄົດທີ່ເຊື່ອວ່າມີເຫດຜົນພາຍໃຕ້ຖານະທາງການເງິນຢ່າງມີສາລະສຳຄັນ.

ບໍລິສັດໄດ້ມີການປະມານການ ແລະ ສົມມຸດຖານທີ່ກ່ຽວຂ້ອງກັບອະນາຄົດ. ຜົນການປະມານການທາງບັນຊີທີ່ເກີດຂຶ້ນ ໂດຍໃຈຄວາມ ຂ້ອນຂ້າງຈະບໍ່ເທົ່າກັບຜົນທີ່ແທ້ຈິງທີ່ກ່ຽວຂ້ອງ, ການປະມານການ ແລະ ສົມມຸດຖານທີ່ມີຄວາມສ່ຽງຢ່າງມີສາລະສຳຄັນໃນການປັບແກ້ມູນຄ່າຕາມບັນຊີຂອງຊັບສິນ ແລະ ໜີ້ສິນ ພາຍໃນປີການບັນຊີຕໍ່ໄປມີດັ່ງນີ້.

4.1 ການດ້ອຍຄ່າຂອງໜີ້ຕ້ອງຮັບທາງການຄ້າ

ໃນການກຳນົດຄ່າເຜື່ອໜີ້ສົງໄສຈະສູນ, ບໍລິສັດໄດ້ດຳເນີນພິຈາລະນາ ແລະ ຄາດຄະເນໂດຍອີງຕາມປະຫວັດການເກັບເງິນໃນອະດີດ ແລະ ອາຍຸໜີ້ສິນຄ້າງຈ່າຍ.

4.2 ການດ້ອຍຄ່າຂອງຊັບສິນຄົງທີ່ມີຕົວຕົນ

ບໍລິສັດ ໄດ້ປະເມີນມູນຄ່າທີ່ຄາດວ່າຈະໄດ້ຮັບຄືນທາງຊັບສິນໂດຍພິຈາລະນາຈາກມູນຄ່າຍຸດຕິທຳຫັກກັບຕົ້ນທຶນໃນການຂາຍ. ມູນຄ່າຍຸດຕິທຳຖືກກຳນົດຈາກລາຄາຕະຫຼາດຂອງມູນຄ່າທຽບເທົ່າຊັບສິນ. ຜົນຂອງການຂາດທຶນໃນການດ້ອຍຄ່າ ຈະຮັບຮູ້ໃນໃບລາຍງານຜົນໄດ້ຮັບ.

5. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	2020 ລ້ານກີບ	2019 ລ້ານກີບ
ເງິນສົດໃນມື	18	145
ເງິນຝາກທີ່ສາມາດຖອນຄືນໄດ້ໃນເວລາທີ່ຕ້ອງການກັບສະຖາບັນການເງິນ	70	50
	88	**195**

ເງິນສົດໃນມືປະກອບມີເງິນສົດຍ່ອຍ ສຳລັບການດຳເນີນງານໃນແຕ່ລະມື້.

ຝາກເງິນກັບສະຖາບັນການເງິນ ແມ່ນເງິນຝາກກັບທະນາຄານພາຍໃນປະເທດ ທີ່ມີສາມສະກຸນເງິນຄື ໂດລາສະຫະລັດ, ບາດ, ແລະ ກີບ ໃນບັນຊີກະແສລາຍວັນ ໂດຍບໍ່ມີດອກເບ້ຍ.

6. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸທິ

	2020 ລ້ານກີບ	2019 ລ້ານກີບ
ໜີ້ຕ້ອງຮັບການຄ້າ	312,270	315,662
ຫັກ: ໜີ້ສົງໄສຈະສູນ	(304,903)	(264,149)
ໜີ້ຕ້ອງຮັບ, ສຸດທິ (ກ)	7,367	51,513
ໜີ້ຕ້ອງຮັບ ຈາກ ກຸ່ມບໍລິສັດ ພູສີ (ບົດອະທິບາຍຂໍ້ 21) ຂ)	68,987	64,491
ເງິນໃຫ້ກູ້ຢືມ ແກ່ ກຸ່ມບໍລິສັດ ພູສີ (ບົດອະທິບາຍຂໍ້ 21) ຂ)	61,260	65,035
ໜີ້ຕ້ອງຮັບອື່ນໆ	403	403
	138,017	**181,442**

(ກ) ຍອດເຫຼືອໜີ້ຕ້ອງຮັບການຄ້າ ໃນວັນທີ 31 ທັນວາ ມີອາຍຸການດັ່ງຕໍ່ໄປນີ້:

	2020 ລ້ານກີບ	2019 ລ້ານກີບ
ບໍ່ຄົບກຳນົດ	-	-
ເກີນກຳນົດ:		
0 – 3 ເດືອນ	2,912	1,042
3 – 6 ເດືອນ	-	569
6 – 12 ເດືອນ	544	-
ຫຼາຍກວ່າ 1 ປີ	-	-
ຫຼາຍກວ່າ 2 ປີ	-	48,576
ຫຼາຍກວ່າ 3 ປີ	308,814	265,475
ຍອດລວມໜີ້ຕ້ອງຮັບການຄ້າ ສຸດທິ	312,270	315,662
ຫັກ: ສຳຮອງໜີ້ສົງໄສຈະສູນ*	(304,903)	(264,149)
	7,367	**51,513**

*ບໍລິສັດມີລູກຄ້າພຽງລາຍດຽວຄືໜ່ວຍງານລັດຖະບານ ສປປ ລາວ, ເຊິ່ງຈະພິຈາລະນາຕັ້ງຄ່າເພື່ອໜີ້ສົງໄສຈະສູນຕາມ ກົດເກນບາງປະການ ເຖິງວ່າໃນອະດີດ ຈະບໍ່ມີການຜິດນັດຊຳລະເງິນຈາກໜ່ວຍງານລັດຖະບານ ສປປ ລາວ, ແຕ່ຢ່າງໃດກໍ່ຕາມ ຝ່າຍບໍລິຫານພິຈາລະນາຕັ້ງຄ່າເພື່ອໜີ້ສົງໄສຈະສູນ 100% ສຳລັບຍອດເຫຼືອ ທີ່ເກີນ 3 ປີ ເປັນການສຳຮອງ.

7. ຊັບສິນໝຸນວຽນອື່ນໆ

	2020 ລ້ານກີບ	2019 ລ້ານກີບ
ດອກເບ້ຍຄ້າງຮັບ ຈາກພາກສ່ວນທີ່ກ່ຽວຂ້ອງ*	10,411	7,417
ເງິນລ່ວງໜ້າໃຫ້ຜູ້ສະໜອງ	206	206
ເງິນລ່ວງໜ້າໃຫ້ພະນັກງານ	39	47
ຄ່າໃຊ້ຈ່າຍ ຈ່າຍລ່ວງໜ້າ	20	28
	10,676	**7,698**

* ດອກເບ້ຍຄ້າງຮັບ ຈາກພາກສ່ວນທີ່ກ່ຽວຂ້ອງ – ກ່ຽວຂ້ອງກັບເງິນກູ້ຢືມໃຫ້ແກ່ກຸ່ມບໍລິສັດພູສີ ໃນບົດອະທິບາຍທີ 6.

8. ຊັບສິນບັດຄົງທີ່ ມີຕົວຕົນ, ສຸດທິ

	ທີ່ດິນ ລ້ານກີບ	ອາຄານ ລ້ານກີບ	ຍານພາຫະນະ ລ້ານກີບ	ເຟີນີເຈີ ແລະ ເຄື່ອງຕິດຕັ້ງ ລ້ານກີບ	ຄອມພິວເຕີ ແລະ ເຄື່ອງໃຊ້ ຫ້ອງການ ລ້ານກີບ	ລວມ ລ້ານກີບ
ໃນວັນທີ 31 ທັນວາ 2019						
ຕົ້ນທຶນ	466,000	18	34,852	1,061	448	502,379
ຫັກ ຄ່າຫລຸ້ຍຫ້ຽນສະສົມ	-	(10)	(25,138)	(980)	(422)	(26,550)
ຄ່າດ້ອຍຄ່າ	-	-	(1,299)	-	-	(1,299)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**466,000**	**8**	**8,415**	**81**	**26**	**474,530**
ຍອດຍົກມາຕາມບັນຊີສຸດທິ	**466,000**	**8**	**8,415**	**81**	**26**	**474,530**
ຄ່າຫລຸ້ຍຫ້ຽນ (ບົດອະທິບາຍ 17)	-	(2)	(4,096)	(53)	(13)	(4,164)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**466,000**	**6**	**4,319**	**28**	**13**	**470,366**
ໃນວັນທີ 31 ທັນວາ 2020						
ຕົ້ນທຶນ	466,000	18	34,852	1,061	448	502,379
ຫັກ ຄ່າຫລຸ້ຍຫ້ຽນສະສົມ	-	(12)	(29,234)	(1,033)	(435)	(30,714)
ຄ່າດ້ອຍຄ່າ	-	-	(1,299)	-	-	(1,299)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**466,000**	**6**	**4,319**	**28**	**13**	**470,366**

ທີ່ດິນມູນຄ່າ 48,968 ລ້ານກີບ ໃຊ້ເປັນຫຼັກປະກັນສຳລັບການກູ້ຢືມ (ບົດອະທິບາຍທີ 11).

9. ເງິນໃຫ້ກູ້ຢືມແກ່ພາກສ່ວນທີ່ກ່ຽວຂ້ອງ

	2020 ລ້ານກີບ	2019 ລ້ານກີບ
ເງິນໃຫ້ກູ້ຢືມແກ່:		
- ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 21) ຂ)	861	861

10. ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	2020 ລ້ານກີບ	2019 ລ້ານກີບ
ໜີ້ຕ້ອງສົ່ງການຄ້າ - ພາກສ່ວນອື່ນ	12,851	19,101
ໜີ້ຕ້ອງສົ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 21) ຂ)	35,122	26,642
	47,973	**45,743**

11. ເງິນກູ້ຢືມ, ສຸດທິ

	2020 ລ້ານກີບ	2019 ລ້ານກີບ
ສະຖາບັນການເງິນ	38,422	38,422
ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 21) ຂ)	16,000	16,000
	54,422	**54,422**

	2020 ລ້ານກີບ	2019 ລ້ານກີບ
ໝຸນວຽນ	46,422	42,622
ບໍ່ໝຸນວຽນ	8,000	11,800
	54,422	**54,422**

11. ເງິນກູ້ຢືມ, ສຸດທິ (ຕໍ່)

ລາຍການເຄື່ອນໄຫວຂອງເງິນກູ້ຢືມສາມາດວິເຄາະໄດ້ດັ່ງລຸ່ມນີ້:

	2020 ລ້ານກີບ	2019 ລ້ານກີບ
ຍອດຍົກມາວັນທີ 1 ມັງກອນ	54,422	53,507
ເພີ່ມຂຶ້ນໃນລະຫວ່າງປີ	3,200	10,515
ຊຳລະເງິນກູ້ຢືມຄືນໃນລະຫວ່າງປີ	(3,200)	(9,600)
ວັນທີ 31 ທັນວາ	**54,422**	**54,422**

ເງິນກູ້ຢືມຈາກສະຖາບັນການເງິນ:

ບໍລິສັດ ໄດ້ເຊັນສັນຍາເງິນກູ້ຢືມຈຳນວນ 36,000 ລ້ານກີບ ແລະ ຈຳນວນ 5,000 ລ້ານກີບ ກັບ ທະນາຄານ ເອັສທີ ຈຳກັດ ເພື່ອເປັນທຶນໝຸນວຽນ ສຳລັບການກໍ່ສ້າງທາງ ເຊິ່ງມີອັດຕາດອກເບ້ຍ 17% ແລະ 11% ຕໍ່ປີ ຕາມລຳດັບ ນັບຕັ້ງແຕ່ ປີ 2015, ເງິນກູ້ຢືມນີ້ແມ່ນມີທີ່ດິນຂອງບໍລິສັດ ເປັນຫຼັກຊັບຄ້ຳປະກັນ (ບົດອະທິບາຍຂໍ້ 8) ແລະ ທີ່ດິນຂອງພາກສ່ວນທີ່ກ່ຽວຂ້ອງ, ບໍລິສັດຕ້ອງໄດ້ຊຳລະຕົ້ນທຶນພາຍໃນ 3 ປີ ນັບແຕ່ວັນທີທີ່ເບີກເງິນກູ້ຄັ້ງທຳອິດໃນແຕ່ລະປີ ແລະ ຈ່າຍດອກເບ້ຍເປັນລາຍເດືອນ.

ນະວັນທີລາຍງານ, ບໍລິສັດ ຢູ່ໃນລະຫວ່າງເຈລະຈາເງື່ອນໄຂຄືນໃໝ່ຂອງການຊຳລະເງິນກັບຜູ້ໃຫ້ກູ້ຢືມ ແລະ ຜູ້ໃຫ້ກູ້ຢືມບໍ່ດຳເນີນການໃດໆເທື່ອກ່ຽວກັບການຜິດນັດຊຳລະ.

ໃນລະຫວ່າງປີ 2020 ບໍລິສັດ ໄດ້ເພີ່ມເງິນກູ້ຢືມ ຈຳນວນ 3,200 ລ້ານກີບ ຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ ຂໍ້ 21) ເຊິ່ງມີອັດຕາດອກເບ້ຍ 10 % ຕໍ່ປີ.

ການວິເຄາະເງິນກູ້ຢືມດັ່ງກ່າວມີດັ່ງຕໍ່ໄປນີ້:

	2020 ລ້ານກີບ	2019 ລ້ານກີບ
ຕ່ຳກວ່າ 1 ປີ	46,422	42,622
ຫຼາຍກວ່າ 1 ປີ ແຕ່ບໍ່ເກີນ 5 ປີ	8,000	11,800
ຫຼາຍກວ່າ 5 ປີ	-	-
	54,422	**54,422**

12. ອາກອນຄ້າງຈ່າຍ

ອີງຕາມການປະຕິບັດການຊຳລະອາກອນລະຫວ່າງໜ່ວຍງານສ່ວຍສາອາກອນ ແລະ ບໍລິສັດ, ອາກອນກຳໄລຖືກຄິດໄລ່ໂດຍການປະເມີນອັດຕາກຳໄລສຸດທິ ຄູນໃຫ້ອັດຕາອາກອນກຳໄລ ແລະ ລາຍໄດ້ຈາກການກໍ່ສ້າງ. ອາກອນກຳໄລຈະໄດ້ຮັບການສະສາງຄືນເມື່ອລັດຖະບານຈ່າຍເງິນໃຫ້ແກ່ບໍລິສັດ.

ໃນວັນທີ 31 ທັນວາ 2020 ອາກອນກຳໄລຄ້າງຈ່າຍແມ່ນມາຈາກລາຍຮັບການກໍ່ສ້າງ ໃນລະຫວ່າງປີ ແລະ ກ່ອນປີ 2020.

13. ໜີ້ສິນໝຸນວຽນອື່ນໆ

	2020 ລ້ານກີບ	2019 ລ້ານກີບ
ອາກອນມູນຄ່າເພີ່ມ ຄ້າງຈ່າຍ	29,991	30,300
ໜີ້ຕ້ອງສົ່ງດອກເບ້ຍໃຫ້ພາກສ່ວນທີ່ກ່ຽວຂ້ອງ	567	134
ໜີ້ຕ້ອງສົ່ງດອກເບ້ຍໃຫ້ສະຖາບັນການເງິນ	17,592	11,138
ເງິນປັນຜົນຄ້າງຈ່າຍ	1,863	1,863
ເງິນຮັບລ່ວງໜ້າຈາກ ຜູ້ຮັບເໝົາ	875	982
ເງິນຮັບລ່ວງໜ້າຈາກລັດຖະບານ	893	893
ເງິນເດືອນຄ້າງຈ່າຍ	141	211
ອື່ນໆ	912	802
	52,834	**46,323**

14. ທຶນຈົດທະບຽນ ແລະ ສ່ວນເພີ່ມມູນຄ່າຮຸ້ນໃນທຶນຈົດທະບຽນ

	ຈຳນວນຂອງ ຮຸ້ນ ລ້ານຮຸ້ນ	ຮຸ້ນສາມັນ ລ້ານກີບ	ສ່ວນເພີ່ມມູນ ຄ່າຮຸ້ນ ລ້ານກີບ	ລວມ ລ້ານກີບ
ໃນວັນທີ 1 ມັງກອນ 2019	582	582,000	12,540	594,540
ອອກຮຸ້ນ	-	-	-	-
ວັນທີ 31 ທັນວາ 2019	**582**	**582,000**	**12,540**	**594,540**
ໃນວັນທີ 1 ມັງກອນ 2020	582	582,000	12,540	594,540
ອອກຮຸ້ນ	-	-	-	-
ວັນທີ 31 ທັນວາ 2020	**582**	**582,000**	**12,540**	**594,540**

ໃນວັນທີ 31 ທັນວາ 2020 ບໍລິສັດມີຮຸ້ນ ຈຳນວນ 582,000,000 ຮຸ້ນ ເຊິ່ງມີມູນຄ່າຮຸ້ນລະ 1,000 ກີບ ແລະ ໄດ້ຊຳລະຄົບໝົດແລ້ວ.

ບໍລິສັດ ເກີດມີສ່ວນເພີ່ມຂອງມູນຄ່າຮຸ້ນ ຈຳນວນ 12,540 ລ້ານກີບ ແລະ ຖືກຈົດຖະບຽນເຂົ້າໃນຈະຕະຫຼາດຫຼັກຊັບໃນປີ 2017.

15. ສຳຮອງຕາມລະບຽບການ

	2020 ລ້ານກີບ	2019 ລ້ານກີບ
ຍອດຍົກມາ	11,572	11,572
ເພີ່ມຂຶ້ນໃນລະຫວ່າງປີ	-	-
	11,572	**11,572**

ສຳຮອງຕາມລະບຽບການແມ່ນຕັ້ງຂຶ້ນຕາມກົດໝາຍວິສາຫະກິດ ຂອງ ສປປ ລາວ ເຊິ່ງກຳນົດໃຫ້ຫັກ 10% ຂອງກຳໄລສຸດທິປະຈຳ ປີ ເປັນເງິນສຳຮອງຈົນກວ່າເງິນສຳຮອງດັ່ງກ່າວຮອດ 50% ຂອງທຶນຈົດທະບຽນ.

16. ເງິນປັນຜົນ

2020:

ໃນການປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ ທີ່ໄດ້ຈັດຂຶ້ນວັນທີ 29 ພຶດສະພາ 2020, ຜູ້ຖືຮຸ້ນໄດ້ອະນຸມັດບໍ່ຈ່າຍເງິນປັນຜົນສຳລັບປີ 2019 ເນື່ອງຈາກຂາດທຶນຈາກການດຳເນີນທຸລະກິດ.

2019:

ໃນກອງປະຊຸມສາມັນປະຈຳປີຜູ້ຖືຮຸ້ນທົ່ວໄປ, ໃນວັນທີ 28 ກຸມພາ 2020, ຜູ້ຖືຮຸ້ນໄດ້ອະນຸມັດບໍ່ຈ່າຍເງິນປັນຜົນສຳລັບປີ 2018 ເນື່ອງຈາກຂາດທຶນຈາກການດຳເນີນທຸລະກິດ.

17. ລາຍຈ່າຍຕາມລັກສະນະ

	2020 ລ້ານກີບ	2019 ລ້ານກີບ
ຄ່າເຜື່ອສຳລັບໜີ້ສົງໄສຈະສູນ	40,754	-
ລາຍຈ່າຍຄ່າເຊື່ອມມູນຄ່າ (ບົດອະທິບາຍທີ 8)	4,164	4,190
ລາຍຈ່າຍພະນັກງານ	2,014	2,983
ລາຍຈ່າຍອື່ນໆ	912	1,603
ວັດຖຸ	177	1,386
ລາຍຈ່າຍດ້ານທີ່ປຶກສາ	374	423
ລາຍຈ່າຍຄ່າເດີນທາງ	169	287
ລາຍຈ່າຍຄ່າສ້ອມແປງ ແລະ ບຳລຸງຮັກສາ	66	87
ລາຍຈ່າຍຕັດຈ່າຍ	-	5
	48,630	**10,964**

18. ລາຍຈ່າຍດອກເບ້ຍ

	2020 ລ້ານກີບ	2019 ລ້ານກີບ
ລາຍຈ່າຍດອກເບ້ຍ ຈາກເງິນກູ້ຢືມ		
- ສະຖາບັນການເງິນ	6,455	6,996
- ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ ຂໍ້ 21) ກ)	1,636	1,525
	8,091	**8,521**

19. ອາກອນກຳໄລ

ຕາມຫຼັກການຊຳລະອາກອນກຳໄລ ລະຫວ່າງ ເຈົ້າໜ້າທີ່ສ່ວຍສາອາກອນ ແລະ ບໍລິສັດ ທີ່ໄດ້ອະທິບາຍໄວ້ໃນ (ບົດອະທິບາຍຂໍ້ 12), ອາກອນກຳໄລ ແມ່ນສະແດງເຖິງໜີ້ຕ້ອງສົ່ງອາກອນກຳໄລຈາກລາຍຮັບຂອງການກໍ່ສ້າງ ແຕ່ລັດຖະບານຂອງ ສປປ ລາວ ຍັງ ບໍ່ທັນໄດ້ຊຳລະເງິນ.

ໃນລະຫວ່າງປີ 2020, ອາກອນລາຍຮັບ ສະບັບໃຫມ່ ເລກທີ 67/ສພຊ ລົງທີ 18 ມິຖຸນາ 2019 ມີຜົນບັງຄັບໃຊ້ຕັ້ງແຕ່ ວັນ 1 ມັງກອນ ປີ 2020 ເປັນຕົ້ນໄປ ແລະ ເຮັດໃຫ້ ບໍລິສັດ ຕ້ອງເສຍອາກອນ ກຳໄລໃນອັດຕາ 20% ແລະ ເສຍອາກອນລາຍຮັບ 15% ຂອງລາຍຮັບທຸລະກິດ.

20. ກຳໄລ (ຂາດທຶນ) ພື້ນຖານຕໍ່ຮຸ້ນ

ກຳໄລພື້ນຖານຕໍ່ຮຸ້ນແມ່ນຄິດໄລ່ໂດຍການຫານກຳໄລສຸດທິໃຫ້ແກ່ຜູ້ຖືຮຸ້ນຂອງບໍລິສັດ ຕາມຈຳນວນຮຸ້ນສະເລ່ຍ ຂອງຜູ້ຖືຮຸ້ນສາມັນ ໃນລະຫວ່າງປີ.

	2020	2019
ຈຳນວນສະເລ່ຍຂອງຮຸ້ນສາມັນ (ລ້ານຮຸ້ນ)	582	582
(ຂາດທຶນ) ສຸດທິໃນປີ ໃຫ້ຜູ້ຖືຮຸ້ນ (ລ້ານກີບ)	(57,942)	(8,790)
(ຂາດທຶນ) ພື້ນຖານຕໍ່ຮຸ້ນ (ກີບ)	**(99.56)**	**(15.10)**

21. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ຜ່ານ ໜຶ່ງ ຫຼື ຫຼາຍກຸ່ມ ຄວບຄຸມ ຫຼື ຖືກຄວບຄຸມໂດຍບໍລິສັດ ຫຼື ພາຍໃຕ້ການຄວບຄຸມທົ່ວໄປຂອງບໍລິສັດ ລວມທັງບໍລິສັດ ທີ່ເຮັດໜ້າທີ່ຖືຮຸ້ນ ບໍລິສັດ ຍ່ອຍ ແລະ ບໍລິສັດ ທີ່ກ່ຽວຂ້ອງກັບບໍລິສັດຍ່ອຍຖືເປັນບໍລິສັດໃນກຸ່ມດຽວກັນ ບຸກຄົນທີ່ເປັນເຈົ້າຂອງທາງກົງ ຫຼື ທາງອ້ອມ ທີ່ມີສ່ວນໄດ້ເສຍໃນບໍລິສັດ ແລະ ມີອິດທິພົນຫຼາຍຕໍ່ກັບ ບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ, ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ໃນວັນທີ 31 ທັນວາ 2020, ບໍລິສັດ ແມ່ນຢູ່ພາຍໃຕ້ການຄວບຄຸມໂດຍ ຄອບຄົວ ພົມມະຈິດ, ເຊິ່ງຖືຮຸ້ນ 86% ຂອງ ຮຸ້ນບໍລິສັດ (2019: 86%). ສ່ວນຮຸ້ນທີ່ເຫຼືອ 14% ແມ່ນຖືຮຸ້ນໂດຍບຸກຄົນທົ່ວໄປ, ຝ່າຍຄວບຄຸມ ບໍລິສັດ ຄື ທ່ານ ສີທອງ ພົມມະຈິດ. ເຊິ່ງ ທ່ານໄດ້ເປັນ ຜູ້ບໍລິຫານຂອງ ກຸ່ມບໍລິສັດ ພຸສີ ຈຳກັດ ຜູ້ດຽວ.

ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງໃນລະຫວ່າງໄລຍະ ໄດ້ວິເຄາະດັ່ງລຸ່ມນີ້:

ກ) ຊື້ສິນຄ້າ ຫຼື ບໍລິການ ແລະ ອື່ນໆ

	2020 ລ້ານກີບ	2019 ລ້ານກີບ
ລາຍຮັບດອກເບ້ຍຈາກ ພຸສີກຣຸບ	2,994	3,436
ລາຍຈ່າຍດອກເບ້ຍ (ບົດອະທິບາຍຂໍ້18)	1,636	1,525
ຄ່ານ້ຳມັນ	182	784
ຄ່າເຊົ່າ	180	180

ຂ) ຍອດຄ້າງຊຳລະກັບພາກສ່ວນທີ່ກ່ຽວຂ້ອງ

	2020 ລ້ານກີບ	2019 ລ້ານກີບ
ຈຳນວນເງິນກັບພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ ຂໍ້ 6) (1)	68,987	64,491
ເງິນກູ້ຢືມໄລຍະສັ້ນ - ພຸສີກຣຸບ (ບົດອະທິບາຍ ຂໍ້ 6) (2)	61,260	65,035
ເງິນກູ້ຢືມໄລຍະຍາວຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 9)	861	861
ເຈົ້າໜີ້ອື່ນໆ – ພຸສີກຣຸບ (ບົດອະທິບາຍຂໍ້ 10)	35,122	26,642
ເງິນກູ້ຢືມໄລຍະຍາວ (ບົດອະທິບາຍຂໍ້ 11) (3)	16,000	16,000

(1) ຈຳນວນເງິນກັບ ກຸ່ມບໍລິສັດ ພຸສີ ຈຳກັດ ຜູ້ດຽວເຊິ່ງບໍ່ມີດອກເບ້ຍ ແລະ ສາມາດຮຽກເກັບຄືນໄດ້ໃນເວລາທີ່ຕ້ອງການ.

(2) ໃນວັນທີ 27 ທັນວາ 2017, ບໍລິສັດໄດ້ຕົກລົງເຊັນສັນຍາເງິນກູ້ຢືມໄລຍະສັ້ນຈຳນວນ 86,531 ລ້ານກີບກັບພຸສີກຣຸບ ເພື່ອລົງທຶນໃສ່ໃນການພັດທະນາໂຄງການຕົວເມືອງໃໝ່ໃນແຂວງຫຼວງພະບາງ ດ້ວຍອັດຕາດອກເບ້ຍ 5% ຕໍ່ປີ, ບໍ່ມີຫຼັກຄ້ຳປະກັນ.

21. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຂ) ຍອດຄ້າງຊຳລະກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

(3) ລາຍການເຄື່ອນໄຫວຂອງເງິນກູ້ຢືມສາມາດວິເຄາະໄດ້ດັ່ງນີ້:

	2020 ລ້ານກີບ	2019 ລ້ານກີບ
ຍອດຍົກມາ	16,000	15,085
ເພີ່ມຂຶ້ນໃນປີ	3,200	10,515
ຊຳລະຄືນເງິນຕົ້ນ	(3,200)	(9,600)
ຍອດເຫຼືອທ້າຍ	**16,000**	**16,000**

ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງທີ່ມີອັດຕາດອກເບ້ຍສະເລ່ຍ 9.75% ຕໍ່ປີ ເຖິງ 11.13% ຕໍ່ປີ ແລະ ໃຊ້ສຳລັບການດຳເນີນງານໃນບໍລິສັດ. ເງື່ອນໄຂການຊຳລະຄືນເງິນຕົ້ນແມ່ນ 1 ຫາ 4 ປີ ເປັນປະຈຳທຸກປີ ເລີ່ມຈາກປີ 2017 ເຖິງ 2022.

ເງິນກູ້ຢືມດັ່ງກ່າວແມ່ນສະກຸນເງິນ ລາວກີບ ແລະ ໄດ້ວິເຄາະອາຍຸຂອງເງິນກູ້ຢືມດັ່ງລຸ່ມນີ້:

	2020 ລ້ານກີບ	2019 ລ້ານກີບ
ຕ່ຳກວ່າ 1 ປີ	8,000	4,200
ຫຼາຍກວ່າ 1 ປີ ແຕ່ບໍ່ເກີນ 5 ປີ	8,000	11,800
ເກີນ 5 ປີ	-	-
	16,000	**16,000**

22. ພາລະຜູກພັນ ແລະ ສັນຍາທີ່ສຳຄັນ

	2020 ລ້ານກີບ	2019 ລ້ານກີບ
ພາລະຜູກພັນ ຄ່າເຊົ່າຫ້ອງການ (1)	1,080	1,260
ຄ່າບໍລິການ ທີ່ປຶກສາ	-	266
	1,080	**1,526**

(1) ບໍລິສັດເປັນຜູ້ເຊົ່າທີ່ດິນ ແລະ ຫ້ອງການ ພາຍໃຕ້ສັນຍາເຊົ່າໃນການດຳເນີນງານໂດຍບໍ່ມີການຍົກເລີກສັນຍາ. ໄລຍະເຊົ່າແມ່ນ 10 ປີ ແລະ ສ່ວນໃຫຍ່ຂອງສັນຍາເຊົ່າສາມາດຕໍ່ສັນຍາເມື່ອສັນຍາຈະໝົດອາຍຸຕາມການຕົກລົງກັນ.

ຊີວະປະຫວັດຫຍໍ້ສະມາຊິກອິດສະຫຼະ



ທ່ານ ບຸນມີ ມະນີວົງ
ຕຳແໜ່ງ: ຮອງປະທານສະພາບໍລິຫານ/ສະມາຊິກອິດສະຫຼະ
ບ້ານ ໂພນສີນວນ, ເມືອງ ສີສັດຕະນາກ ,ນະຄອນຫຼວງວຽງຈັນ
ໂທລະສັບມືຖື: (856-20) 99949399
ວັນເດືອນປີເກີດ: ວັນທີ 14 ເມສາ 1954
ສັນຊາດ: ລາວ

ວຸດທິການສຶກສາ	
1997-1998	ໃບຢັ້ງຢືນຮຽນບຳລຸງ ທິດສະດີການເມືອງ-ການປົກຄອງຊັ້ນສູງ, ສະຖາບັນການເມືອງ ການປົກຄອງ ແຫ່ງຊາດ, ນະຄອນຫຼວງວຽງຈັນ
1984	ຊັ້ນສູງ ໂຮງຮຽນການເມືອງການປົກຄອງ ຈາກ ສສ ຫວຽດນາມ
1977-1978	ໃບຢັ້ງຢືນບຳລຸງວິຊາພາສີ-ອາກອນ ໂຮງຮຽນການເງິນແຂວງຫຼວງພະບາງ.
ປະສົບການປະກອບວິຊາຊີບ	
2014	ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ
2009-2011	ຫົວໜ້າຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ
2001-2009	ຫົວໜ້າກົມສົ່ງເສີມ ແລະ ພັດທະນາສິນຄ້າ, ກະຊວງອຸດສາຫະກຳ ແລະ ການຄ້າ
1998-2001	ຄະນະຊີ້ນຳພັດທະນາຊົນນະບົດຂັ້ນສູນກາງ, ທັງເປັນຫົວໜ້າຫ້ອງການຄະນະຊີ້ນຳພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ຂຶ້ນກັບຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ
1993-1997	ຮອງເຈົ້າແຂວງຫຼວງພະບາງ
1982-1993	ຫົວໜ້າພະແນກການເງິນແຂວງຫຼວງພະບາງ
1979-1982	ຫົວໜ້າອຳນວຍການໂຮງຮຽນການເງິນ ແຂວງຫຼວງພະບາງ
1975-1979	ຫົວໜ້າຫ້ອງການພາສີ-ອາກອນ ແຂວງຫຼວງພະບາງ
1973-1975	ພະນັກງານບັນຊີສາງປະຈຳຢູ່ເຂດຊາຍແດນຫວຽດນາມ-ຈີນ, ພະແນກການເງິນ ແຂວງຫຼວງພະບາງ
1968-1972	ພະນັກງານຄິດໄລ່ງົບປະມານຂອງ ພະແນກການເງິນ ແຂວງຫຼວງພະບາງ.

ທ່ານ ນັນທະລັດ ທິລະກຸນ.
ບ້ານ ວຽງຄຳ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ.
ໂທລະສັບມືຖື: (856-20) 56110372.
ວັນເດືອນປີເກີດ: ວັນທີ 05 ມັງກອນ 1970.
ສັນຊາດ: ລາວ.
ອີເມວ: thirakul@hotmail.com



ວຸດທິການສຶກສາ

- ຊັ້ນສູງການບໍລິຫານ ວິທະຍາໄລ Fanshawe ກຸງລອນດອນ.

ປະສົບການປະກອບວິຊາຊີບ

2016 ເຖິງ ປັດຈຸບັນ	ສະມາຊິກອິດສະຫຼະ/ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.
2011 - 2016	ຜູ້ອຳນວຍການ/ Consultant – Accounting Company.
2009 - 2011	ຜູ້ອຳນວຍການ/ Petroff Communication.
2001 - 2003	ຜູ້ຈັດການ/ Canada Life Insurance.

ເອກະສານຄັດຕິດ 5

ໃບມອບສິດ

ຂຽນທີ່.....

ວັນທີ.....ເດືອນ.....ປີ.....

(1) ຂ້າພະເຈົ້າ.....ສັນຊາດ.....ວັນທີ ເດືອນ ແລະ ປີເກີດ.....
ບັດປະຈຳຕົວເລກທີ ຫຼື ໜັງສືຜ່ານແດນ ເລກທີ.....ເຮືອນເລກທີ.....
ຖະໜົນ.....ບ້ານ.....ເມືອງ.....
ແຂວງ.....ປະເທດ.....

(2) ເປັນຜູ້ຖືຮຸ້ນຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ .....ຮຸ້ນ ເຊິ່ງເທົ່າກັບຈຳນວນທີ່ຈະລົງຄະແນນສຽງໄດ້.

(3) ຂໍມອບໝາຍໃຫ້ (ກະລຸນາໃສ່ເຄື່ອງໝາຍ ✓ ລົງໃນຊ່ອງຜູ້ຮັບມອບສິດພຽງທ່ານໃດທ່ານໜຶ່ງ)

☐ (3.1) ທ່ານ/ທ່ານ ນາງ.....ອາຍຸ.....ປີ
ບັດປະຈຳຕົວເລກທີ ຫຼື ໜັງສືຜ່ານແດນເລກທີ....., ເຮືອນເລກທີ.....ບ້ານ.....
ເມືອງ.....ແຂວງ....., ປະເທດ..... ຫຼື

☐ (3.2) ທ່ານ ບຸນມີ ມະນີວົງ ອາຍຸ 67 ປີ, ບ້ານ ບ້ານ ໂພນສີນວນ ເມືອງ ສີສັດຕະນາກ ແຂວງ ນະຄອນຫຼວງວຽງຈັນ, ປະເທດ ລາວ ຫຼື

☐ (3.3) ທ່ານ ນັນທະລັດ ທິລະກຸນ ອາຍຸ 51 ປີ, ບ້ານ ວຽງຄຳ ເມືອງ.....ສີໂຄດຕະບອງ..... ແຂວງ.....ນະຄອນຫຼວງວຽງຈັນ.....,ປະເທດ ລາວ

ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2020, ໃນວັນທີ 28 ເດືອນ ເມສາ ປີ 2021 ເວລາ 13:00 ໂມງ ຢູ່ທີ່ຊັ້ນ 12, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ ຫຼື ມື້ທີ່ ໄດ້ເລື່ອນໄປໃນວັນ, ເວລາ ແລະ ສະຖານທີ່ອື່ນດ້ວຍ.

(4) ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມ ດັ່ງນີ້:

- ☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ; ຫຼື
- ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ ແລະ ມີສິດຈະພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໃນບາງວາລະ (ກະລຸນາຕື່ມຂໍ້ມູນດ້ານລຸ່ມນີ້); ຫຼື
- ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ (ກະລຸນາຕື່ມຂໍ້ມູນດ້ານລຸ່ມນີ້)

ວາລະທີ 01: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019.

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 02: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2020 ແລະ ເອກະສານລາຍງານການເງິນ ປະຈຳປີ 2020 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ.

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 03: ພິຈາລະນາການບໍ່ຈ່າຍເງິນປັນຜົນ ປະຈຳປີ 2020 ເນື່ອງມາຈາກບໍລິສັດຂາດທຶນຈາກການດຳເນີນງານ

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 04: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2021

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 05: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2021

☐ ເຫັນດີ ☐ ບໍ່ເຫັນດີ

(5) ການລົງຄະແນນສຽງຂອງຜູ້ຕາງໜ້າ ໃນວາລະການປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃນໜັງສືມອບສິດສະບັບນີ້ໃຫ້ຖືວ່າການລົງຄະແນນສຽງນັ້ນ ບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າໃນຖານະຜູ້ຖືຮຸ້ນ;

(6) ໃນກໍລະນີທີ່ຂ້າພະເຈົ້າບໍ່ໄດ້ລະບຸຈຸດປະສົງໃນການອອກສຽງລົງຄະແນນໃນວາລະໃດໄວ້ ຫຼື ລະບຸໄວ້ບໍ່ຊັດເຈນ ຫຼື ໃນກໍລະນີທີ່ກອງປະຊຸມມີການພິຈາລະນາ ຫຼື ລົງມະຕິເລື່ອງໃດນອກເໜືອທີ່ລະບຸໄວ້ຂ້າງຕົ້ນ ລວມເຖິງກໍລະນີທີ່ມີການແກ້ໄຂປ່ຽນແປງ ຫຼື ເພື່ອເຕີມຂໍ້ເທັດຈິງໃດໜຶ່ງ ໃຫ້ຜູ້ຮັບມອບສິດມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ; ແລະ

(7) ກິດຈະກຳໃດທີ່ຜູ້ຮັບມອບສິດໄດ້ເຮັດໄປໃນການປະຊຸມນັ້ນ ໃຫ້ຄືກັນກັບວ່າຂ້າພະເຈົ້າໄດ້ເຮັດເອງທຸກປະການ.

ຜູ້ມອບສິດ

ລົງລາຍເຊັນ.....

(.....)

ຜູ້ຮັບມອບສິດ

ລົງລາຍເຊັນ.....

(.....)

ພະຍານ

ລົງລາຍເຊັນ.....

(.....)

ພະຍານ

ລົງລາຍເຊັນ.....

(.....)

<u>ໝາຍເຫດ</u>

1. ຜູ້ຖືຮຸ້ນທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງທ່ານດຽວເປັນຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງ ລວມທັງບໍ່ສາມາດແບ່ງແຍກຈຳນວນຮຸ້ນໃຫ້ຜູ້ຕາງໜ້າຫຼາຍທ່ານເພື່ອແຍກການລົງຄະແນນສຽງໄດ້; ແລະ
2. ກົດໝາຍວ່າດ້ວຍທະບຽນສານ(ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009 ກຳນົດວ່າ ເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບໝາຍ ແລະ ຜູ້ຕາງໜ້າທາງດ້ານກົດໝາຍ, ດັ່ງນັ້ນ ໃບມອບສິດສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານນຳສຳນັກງານທະບຽນສານ, ກະຊວງຍຸຕິທຳ ໃນນີ້ ບໍລິສັດຈະບໍ່ຮັບຜິດຊອບໃດໆ ໃນກໍລະນີທີ່ໃບມອບສິດ ສະບັບນີ້ທີ່ຍື່ນຕໍ່ບໍລິສັດບໍ່ໄດ້ຈົດທະບຽນສານ.
3. ຜູ້ຕາງໜ້າຕ້ອງສະແດງເອກະສານຂອງຕົນເອງຕໍ່ພະນັກງານປະຈຳໂຕະລົງທະບຽນ ຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ລົງທຶນຕ່າງປະເທດ) ພ້ອມກັບສຳເນົາເອກະສານປະເພດດຽວກັນນີ້ ຂອງຜູ້ຖືຮຸ້ນ,ໃບມອບສິດສະບັບນີ້ ແລະ ໜັງສືເຊີນປະຊຸມ.

ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງ

ເພື່ອຄວາມສະດວກໃນການລົງທະບຽນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ຂອງບໍລິສັດ ພູ ສີກໍ່ສ້າງ ແລະ ພັດທະນາມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະມາເຂົ້າຮ່ວມກອງປະຊຸມ ກະລຸນານຳໜັງສືເຊີນ ປະຊຸມ ແລະ ກະກຽມເອກະສານ ຕາມທີ່ກຳນົດດ້ານລຸ່ມນີ້ມາພ້ອມ.

<u>ບໍລິສັດຂໍສະຫງວນສິດໃນການອານຸຍາດໃຫ້ສະເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້</u>

1. ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີເຂົ້າຮ່ວມກອງປະຊຸມ

1.1 ກໍລະນີຜູ້ຖືຮຸ້ນເປັນບຸກຄົນ

1.1.1. ກໍລະນີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມດ້ວຍຕົນເອງ

ໃຫ້ສະແດງເອກະສານທີ່ລັດຖະການອອກໃຫ້ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນໃຫ້ຍື່ນຫຼັກຖານປະກອບພ້ອມ.

1.1.2. ກໍລະນີຜູ້ຖືຮຸ້ນມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ໃບມອບສິດຕາມແບບຟອມທີ່ຄັດຕິດພ້ອມໜັງສືເຊີນປະຊຸມ ເຊິ່ງໄດ້ມີການປະກອບຂໍ້ມູນຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງຂອງຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ;

(2) ສຳເນົາເອກະສານທີ່ທາງລັດຖະການອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍຕາມຂໍ້ 1.1.1 ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍ;

(3) ເອກະສານທີ່ທາງລັດຖະການອອກໃຫ້ຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງທີ່ເປັນຄົນຕ່າງປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2 ຜູ້ຖືຮຸ້ນເປັນນິຕິບຸກຄົນ

1.2.1 ກໍລະນີຕົວແທນຂອງຜູ້ຖືຮຸ້ນ (ຄະນະອຳນວຍການ) ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງໃຫ້ແຈ້ງ ເອກະ ສານດັ່ງລຸ່ມນີ້:

(1) ເອກະສານທີ່ທາງລັດຖະການອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ເຊັ່ນ: ບັດ ປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຕົວແທນນິຕິບຸກຄົນ (ຄະນະອຳນວຍການ) ທີ່ເປັນຄົນຕ່າງ ປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

(2) ສຳເນົາໃບອານຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບຂອງ ບໍລິສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ ເຊິ່ງມີຂໍ້ມູນສະແດງ ໃຫ້ເຫັນວ່າຕົວແທນຂອງນິຕິບຸກຄົນທີ່ເຂົ້າຮ່ວມກອງປະຊຸມມີອຳນາດດຳເນີນການແທນນິຕິບຸກຄົນ ທີ່ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັ່ນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຄະນະ ອຳນວຍການ)

1.2.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າ ເຂົ້າຮ່ວມກອງປະຊຸມແທນໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

- ໃບມອບສິດ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ເຊິ່ງໄດ້ມີການປະກອບຂໍ້ມູນຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ;
- ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ) ໃບທະບຽນວິສາຫະກິດ, ກິດລະບຽນຂອງບໍລິ ສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າຕົວແທນຂອງນິຕິບຸກຄົນມີອຳນາດກະທຳການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຕົວແທນຂອງນິຕິບຸກຄົນ (ຄະນະອຳນວຍການ);
- ສຳເນົາເອກະສານທີ່ທາງລັດຖະການອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຄະນະອຳນວຍການ) ຕາມຂໍ້ 1.2.1(1) ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຄະນະອຳນວຍການ);
- ເອກະສານທີ່ທາງລັດຖະການອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2.3 ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນຕ່າງປະເທດ

(1) ໃຫ້ປະຕິບັດຕາມຂໍ້ 1.2.1 ຫຼື ຂໍ້ 1.2.2 ແລ້ວແຕ່ກໍລະນີ

(2) ເອກະສານຂອງນິຕິບຸກຄົນຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ແລະໃຫ້ຕົວແທນຂອງນິຕິບຸກຄົນດັ່ງກ່າວລົງລາຍເຊັນຮັບຮອງສະບັບແປພາສາດັ່ງກ່າວ

2. ການມອບໝາຍ

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນບໍລິສັດໄດ້ດ້ວຍຕົນເອງສາມາດມອບໝາຍໃຫ້ຜູ້ຕ່າງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ໂດຍດຳເນີນການດັ່ງນີ້:

2.1. ມອບໝາຍໃຫ້ຜູ້ໃດຜູ້ໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ສະມາຊິກອິດສະຫຼະຂອງສະພາບໍລິຫານຂອງບໍລິສັດທ່ານໃດທ່ານໜຶ່ງໂດຍໃຫ້ລະບຸຊື່ພ້ອມກາເຄື່ອງໝາຍ ✓ ລົງໃນຊ່ອງ □ ໜ້າຊື່ຜູ້ຮັບມອບສິດຕາມທີ່ລະບຸໄວ້ໃນໃບມອບສິດໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບສິດໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ;

2.2. ນຳສົ່ງໜັງສືມອບສິດຄືນເລຂາກອງປະຊຸມບໍລິສັດ ກ່ອນວັນທີ 28 ເມສາ 2021 ຫຼື ກ່ອນເວລາເປີດກອງປະຊຸມຢ່າງໜ້ອຍ 1 ຊົ່ວໂມງ ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານໃຫ້ທັນເວລາເປີດກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕ່າງໜ້າຫຼາຍຄົນເພື່ອແບ່ງການລົງຄະແນນສຽງໄດ້ ແລະ ຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນໂດຍບໍ່ສາມາດມອບໝາຍພຽງບາງສ່ວນນ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

3. ການລົງທະບຽນ

ບໍລິສັດຈະເລີ່ມເປີດຮັບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 ຂອງບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ກ່ອນເປີດກອງປະຊຸມ 2 ຊົ່ວໂມງ ຫຼື ຕັ້ງແຕ່ເວລາ 13:00 ໂມງ ເປັນຕົ້ນໄປໃນວັນ

ທີ 28 ເມສາ 2021 ທີ່ຊັ້ນ 12, ໂຮງແຮມ ຄອນທີເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ ຕາມແຜນທີ່ທີ່ໄດ້ຄັດຕິດມາພ້ອມ.

ໃນນີ້, ໃນແຕ່ລະວາລະກອງປະຊຸມກ່ອນເລີ້ມການລົງຄະແນນ, ບໍລິສັດຈະປິດຮັບລົງທະບຽນເປັນການຊົ່ວຄາວ ແລະ ຈະເປີດຮັບລົງທະບຽນອີກເມື່ອການນັບຄະແນນຂອງແຕ່ລະວາລະປະຊຸມສຳເລັດແລ້ວ.

4. ການລົງຄະແນນສຽງ ແລະ ການນັບຜົນການລົງຄະແນນສຽງ

4.1. ການລົງຄະແນນສຽງ

(1) ໜຶ່ງຮຸ້ນເທົ່າກັບໜຶ່ງສຽງ ແລະ ຜູ້ຖືຮຸ້ນຈະຕ້ອງລົງຄະແນນສຽງເທົ່າກັບຈຳນວນຮຸ້ນຕົນຖືຢູ່ ເທົ່ານັ້ນ.

(2) ບໍລິສັດຈະຈັດໃຫ້ມີບັດລົງຄະແນນ (Ballots) ສຳລັບທຸກໆ ວາລະປະຊຸມທີ່ຕ້ອງມີການລົງຄະ ແນນສຽງໂດຍບໍລິສັດຈະແຈກບັດລົງຄະແນນໃຫ້ຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທຸກຄົນໃນເວລາທີ່ລົງທະບຽນ, **ຍົກເວັ້ນ** ສຳລັບຜູ້ຕາງໜ້າ ເຊິ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສິດຢ່າງຈະແຈ້ງແລ້ວ ບໍລິສັດຈະບໍ່ແຈກບັດລົງຄະແນນໃຫ້ແກ່ຜູ້ຕາງໜ້າດັ່ງກ່າວ, ໃນນີ້ຜູ້ທີ່ມາລົງທະບຽນຫຼັງຈາກເວລາທີ່ກອງປະຊຸມຜູ້ຖືຮຸ້ນໄດ້ເປີດກອງປະຊຸມໄປຕາມລະບຽບວາລະປະຊຸມບາງສ່ວນແລ້ວ, ຈະໄດ້ຮັບບັດລົງຄະແນນສະເພາະວາລະປະຊຸມທີ່ເຫຼືອຢູ່ເທົ່ານັ້ນ.

4.2. ວິທີປະຕິບັດໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ

ໃນການລົງຄະແນນສຽງໃນແຕ່ລະວາລະກອງປະຊຸມ ເພື່ອບໍ່ໃຫ້ເປັນການເສຍເວລາຂອງຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທັງໝົດ, ປະທານຈະຖາມກອງປະຊຸມວ່າມີຜູ້ໃດບໍ່ເຫັນດີ ຫຼື ບໍ່ ຜູ້ທີ່ເຫັນດີບໍ່ຕ້ອງກາເຄື່ອງໝາຍໃດໆ ລົງໃນບັດລົງຄະແນນ (Ballots) ສ່ວນຜູ້ທີ່ບໍ່ເຫັນດີ ກັບວາລະປະຊຸມດັ່ງກ່າວໃຫ້ກາເຄື່ອງໝາຍເຄື່ອງໝາຍ ✓ ລົງໃນຊ່ອງ □ ບໍ່ເຫັນດີ ໃນບັດລົງຄະແນນ ພ້ອມທັງລົງລາຍເຊັນໃນບັດລົງຄະແນນ ແລະ ຍົກມືຂຶ້ນເພື່ອສົ່ງມອບໃຫ້ເຈົ້າໜ້າທີ່ຂອງບໍລິສັດນຳໄປກວດນັບ, ຍົກເວັ້ນສຳລັບຜູ້ຕາງໜ້າເຊິ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບມອບສິດຢ່າງຈະແຈ້ງແລ້ວ ບໍລິສັດຈະບັນທຶກຄະແນນສຽງດັ່ງກ່າວຕັ້ງແຕ່ເວລາຜູ້ທີ່ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ.


ໃນນີ້, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງທີ່ປະທານໄດ້ປະກາດໃຫ້ກອງປະ ຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມາລວມເປັນຄະແນນສຽງອີກ.

4.3. ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນ

ຜູ້ອຳນວຍການໃຫຍ່ຂອງບໍລິສັດຈະເປັນຜູ້ອະທິບາຍວິທີນັບຄະແນນສຽງໃຫ້ກອງປະຊຸມຮັບຊາບ ກ່ອນເລີ່ມວາລະປະຊຸມໂດຍບໍລິສັດຈະນັບຄະແນນສຽງ ແລະ ແຈ້ງຜົນການນັບຄະແນນສຽງໃຫ້ກອງປະຊຸມຮັບຊາບ ກ່ອນສິ້ນສຸດການປະຊຸມໃນແຕ່ລະວາລະ.

ໃນນີ້, ບໍລິສັດຈະໃຊ້ວິທີຫັກຄະແນນສຽງທີ່ບໍ່ເຫັນດີອອກຈາກຈຳນວນສຽງທັງໝົດ ແລະ ສ່ວນທີ່ເຫຼືອຈະຖືເປັນຄະແນນສຽງທີ່ເຫັນດີ.

ແຜນທີ່ສະຖານທີ່ຈັດປະຊຸມ



ສະຖານທີ່: ທີ່ຊັ້ນ 12, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂທລະສັບ: +856 (21) 265 394, ແຟັກ: +856 (21) 265394